PCD


ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

2025







ລາຍລະອຽດ /Contents

I. ປະຫວັດຄວາມເປັນມາຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ 1

II. ທີ່ຕັ້ງສຳນັກງານ 3

III. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ 3

IV. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ 4

4.1 ໂຄງຮ່າງການຈັດຕັ້ງ 4

4.2 ຜູ້ຖືຮຸ້ນ 7

4.3 ສະພາບໍລິຫານ 8

4.4 ຄະນະກຳມະການກວດສອບ 8

5 ຄວາມຄືບຫນ້າການດຳເນີນທຸລະກິດໃນປີ 2025 9

5.1 ການຊອກຫາໂຄງການ 11

5.2 ກົນລະຍຸດການແຂ່ງຂັນ 11

5.3 ວຽກງານດ້ານຍຸດທະສາດອົງກອນ 13

ບົດລາຍງານປະຈຳການດຳເນີນທຸລະກິດປະຈຳປີ 2025

I. ປະຫວັດຄວາມເປັນມາຂອງບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (" ບໍລິສັດ" ຫຼື "PCD") ເປັນໜຶ່ງໃນຜູ້ໃຫ້ບໍລິການວຽກງານວິສະ ອະ ກຳການກໍ່ສ້າງແບບຄົບວົງຈອນ (Design and Engineering Procurement Construction: Design and EPC) ເຊິ່ງລວມກັບວຽກດັ່ງນີ້: ວຽກງານການອອກແບບໂຄງສ້າງວິສະວະກຳ (Design), ວຽກງານຈັດການແບບ ງານວິສະວະກຳ (Engineering), ວຽກງານການຈັດຫາວັດສະດຸອຸປະກອນສຳລັບງານວິສະວະກຳ (Procurement) ແລະ ວຽກງານກໍ່ສ້າງ (Construction). ໂດຍບໍລິສັດມີເປົ້າໝາຍໃຫ້ ບໍລິການໃນວຽກງານວິສະວະກຳພື້ນຖານໂຄງລ່າງ ເປັນຫຼັກເຊັ່ນ: ວຽກກໍ່ສ້າງຖະໜົນ ຫົນທາງ, ຕ້ານເຈື່ອນ ແລະ ພື້ນຖານໂຄງລ່າງອື່ນໆ

ດ້ວຍວິໄສທັດອັນກວ້າງໄກຂອງທ່ານ ສີພອນ ອຸທຸມພອນ (ທ່ານ ສີພອນ) ເຊິ່ງໄດ້ເບິ່ງເຫັນຄວາມຍຸ້ງຍາກໃນການ ເດີນທາງ ຂອງປະຊາຊົນ ປະກອບກັບເຂດພູມສັນຖານຂອງປະເທດເປັນເຂດພູສູງ ເຊິ່ງຍາກຕໍ່ການເດີນທາງ ໄປມາ ລະຫວ່າງບ້ານ, ເມືອງ, ແລະ ແຂວງ ລວມເຖິງ ທ່ານ ສີພອນ ມີແນວຄວາມຄິດຈະເຂົ້າຮ່ວມເປັນກົນຈັກໜຶ່ງໃນການຊຸກຍູ້ ເສີມສ້າງ ໂອກາດໃນການເຕີບໂຕທາງເສດຖະກິດໃນ ສປປ ລາວ . ໂດຍສະເພາະໃນເຂດພາກເໜືອຂອງປະເທດ ດັ່ງນັ້ນ, ໃນປີ 1997 ທ່ານ ສີພອນ ຈຶ່ງໄດ້ສ້າງຕັ້ງບໍລິສັດ ພຸສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວທາງ ຈຳກັດຜູ້ດຽວ ດ້ວຍທຶນ ຈົດທະບຽນ 10 ລ້ານກີບ ໂດຍມີເປົ້າໝາຍເພື່ອດຳເນີນກິດຈະການກໍ່ສ້າງພື້ນຖານໂຄງລ່າງເພື່ອອຳນວຍຄວາມສະດວກ ດ້ານການຄົມມະນາຄົມຂົນສົ່ງ ແລະ ການພົວພັນລະຫວ່າງແຂວງທາງພາກເໜືອໃຫ້ດີຂຶ້ນ. ໃນເວລານີ້ທ່ານສີທອງ ພົມມະ ຈິດ ກໍ່ແມ່ນໜຶ່ງໃນຜູ້ບໍລິຫານຈັດການຂອງບໍລິສັດດັ່ງກ່າວ.

ບໍລິສັດແມ່ນມີການເຕີບໃຫຍ່ຂະຫຍາຍຕົວຈົນຂຶ້ນມາເປັນບໍລິສັດທີ່ໃຫ້ບໍລິການດ້ານວິສະວະກຳການການ ກໍ່ສ້າງຂັ້ນແນວໜ້າໃນເຂດພາກເໜືອຂອງ ສປປ ລາວ. ຈົນ ມາຮອດປີ 2009 ທ່ານ ສີທອງ ພົມມະຈິດ (ທ່ານ ສີທອງ) ເຊິ່ງເປັນນັກທຸລະກິດໜຸ່ມຜູ້ມີວິໄສທັດ ໄດ້ເຂົ້າມາຮັບສືບທອດຂະຫຍາຍຕໍ່ໃນວຽກງານກໍ່ສ້າງຂອງບໍລິສັດ ໂດຍການໂອນ ຖ່າຍກິດຈະການຈາກທ່ານ ສີພອນ ໂດຍຍັງໃຊ້ຊື່ເດີມເປັນບໍລິສັດມີ ພຸສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ -ທາງ ຈຳ ກັດຜູ້ດຽວ ເຊິ່ງມີຜົນງານການໃຫ້ບໍລິການກໍ່ສ້າງໂຄງການທີ່ສຳຄັນຕ່າງໆເຊັ່ນ: ກໍ່ສ້າງທາງ ປູຢາງ 2 ຊັ້ນໃນເຂດພາກເໜືອ, ສ້າງທາງເວັ້ນຕົວເມືອງຫຼວງພະບາງ, ບຸກທະລຸເສັ້ນທາງລຽບຊາຍແດນ ສປປ ລາວ ຫວຽດນາມ-ກຳປູເຈຍ. ສ້ອມແປງທາງ ຈາກຄວາມເສຍຫາຍໄພພິບັດຈາກທຳມະຊາດ ແລະ ອື່ນໆ. ບໍລິສັດຖືໄດ້ວ່າເປັນບໍລິສັດທີ່ມີ ສັກກະຍະພາບໃນການເປັນ ຜູ້ນຳດ້ານການພັດທະນາການກໍ່ສ້າງພື້ນຖານໂຄງລ່າງໄດ້ເປັນຢ່າງດີ. ພຽບພ້ອມດ້ວຍທີມງານທີ່ມີຄວາມຮູ້ຄວາມ, ມີ ເຕັກນິກທາງດ້ານວິສະວະກຳການກໍ່ສ້າງ ແລະ ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ, ຮັກສາຄຸນນະພາບ ແລະ ມາດຕະຖານໃນການເຮັດວຽກໄດ້ ເປັນຢ່າງດີ, ສິ່ງມອບງານທັນເວລາ, ສ້າງຄວາມເຊື່ອຖືໃຫ້ກັບລູກຄ້າທີ່ເປັນເຈົ້າຂອງ ໂຄງການ. ໃນປັຈຸບັນບໍລິສັດໄດ້ປ່ຽນຊື່ມາເປັນ ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເພື່ອຂະຫຍາຍຂອບເຂດ ການໃຫບໍລິການດ້ານວິສະວະກຳການກໍ່ສ້າງແບບຄົບວົງຈອນ ແລະ ເປັນຜູ້ພັດທະນາໂຄງການຕໍ່ໄປໃນອະນາຄົດ .

ປີ		ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ
ປີ 1997	:	ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ຈຳກັດຜູ້ດຽວ ໄດ້ຖືກສ້າງຕັ້ງຂຶ້ນ ດ້ວຍທຶນຈົດທະບຽນ 10 ລ້ານກີບໂດຍທ່ານ ສີພອນ ອຸທຸມພອນ (ທ່ານ ສີພອນ) ເພື່ອດຳເນີນກິດຈະການ ງານກໍ່ສ້າງໂດຍເຂົ້າຮ່ວມປະມູນໂຄງການຈາກພາກລັດ ຫຼື ກະຊວງ ຍທຂ ກົມຂົວທາງ ຫຼື ພະແນກ ຍທຂ ປະຈຳແຂວງຫຼວງພະບາງ. ທ່ານ ສີພອນ ໄດ້ເບິ່ງເຫັນຄວາມຍຸ້ງຍາກຂອງການເດີນທາງໂດຍທາງລົດ ຂອງປະຊາຊົນ ຫຼື ການຂົນສົ່ງເນື່ອງຈາກຖະໜົນຫົນທາງບໍ່ດີ ແລະ ມີອັນຕະລາຍ ລວມເຖິງໄດ້ເບິ່ງເຫັນ ການຂະຫຍາຍຕົວຂອງທຸລະກິດຮັບເໝົາກໍ່ສ້າງໃນຊ່ວງນັ້ນໂດຍແມ່ນແນໃສ່ການກໍ່ສ້າງໃນພາກສ່ວນຂອງພື້ນຖານໂຄງລ່າງເປັນຫຼັກທີ່ຢູ່ໃນຂົງເຂດພາກເໜືອຂອງ ສປປ ລາວ.
ປີ 2004-2005	:	ຈາກການຈະເລີນເຕີບໂຕຢ່າງຫຼວງຫຼາຍຂອງເສດຖະກິດຂອງປະເທດ ແລະ ການຂະຫຍາຍຕົວເມືອງນ້ອຍ-ໃຫ່ຍປະກອບກັບການຂົນສົ່ງສິນຄ້າໂດຍທາງລົດ ແມ່ນມີຄວາມຈຳເປັນຫຼາຍຂຶ້ນ. ທ່ານ ສີພອນ ຈຶ່ງໄດ້ຂະຫຍາຍທຸລະກິດຮັບເໝົາກໍ່ສ້າງໄປຍັງແຂວງ ໄຊຍະບູລີ ແລະ ແຂວງ ບໍ່ແກ້ວ ໂດຍຍັງເນັ້ນວຽກງານການກໍ່ສ້າງພື້ນຖານໂຄງລ່າງເຊັ່ນ: ຖະໜົນຫົນທາງ ແລະ ຂົວ. ເຊິ່ງໃນຂະນະນີ້ເອງ ທ່ານ ສີທອງ ພິມມະຈິດ (ທ່ານ ສີທອງ)ເຂົ້າ ມາເປັນຜູ້ບໍລິຫານ ດ້ານ ການຈັດການຫ້ອງການ ແລະ ງານພາສະໜາມຂອງບໍລິສັດ .
ປີ 2009	:	ທ່ານ ສີທອງ ເຊິ່ງເປັນນັກທຸລະກິດໜຸ່ມຜູ້ມີວິໃສທັດໄດ້ເຂົ້າມາຮັບສືບທອດຂະຫຍາຍຕໍ່ໃນວຽກງານກໍ່ສ້າງຂອງບໍລິສັດ ໂດຍມີການໂອນຖ່າຍກິດຈະການຈາກທ່ານ ສີພອນ ມາຍັງທ່ານສີທອງ ໂດຍຍັງຄົງໃຊ້ຊື່ ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ - ທາງ ຈຳກັດ ຜູ້ດຽວ.
ປີ 2011		ທ່ານ ສີທອງໄດ້ເຫັນການຂະຫຍາຍຕົວຂອງຕົວເມືອງຫຼວງພະບາງໃນພາກພື້ນທີ່ແອອັດຈຶ່ງໄດ້ປຶກສາກັບທີມຜູ້ບໍລິການຂອງບໍລິສັດ ສະເໜີໂຄງການໄປຍັງພະແນກ ຍທຂ ປະຈຳ ແຂວງ ຫຼວງພະບາງ ເພື່ອອະນຸມັດໂຄງການກໍ່ສ້າງທາງເວັ້ນຕົວເມືອງຫຼວງພະບາງ (By pass road) ເສັ້ນທາງ 13 ໜືອ ຕັ້ງແຕ່ບ້ານ ກົ໊ກງົ໊ວ ຫາ ບ້ານພອນໄຊ ແລະ ຂົວເບຕົງຂ້າມແມ່ນ້ຳຄານ 1 ແຫ່ງ. ດ້ວຍມູນຄ່າໂຄງການທັງໝົດປະມານ 209.9 ຕື້ກີບ. ເຊິ່ງ ບໍລິສັດແມ່ນໃຊ້ເງິນທຶນໝຸນວຽນຂອງບໍລິສັດເຂົ້າໃນການກໍ່ສ້າງທັງໝົດ.
ປີ 2016	:	ຕາມກອງປະຊຸມຜູ້ຖືຮຸ້ນໃນວັນທີ 18 ຕຸລາ 2016 ໄດ້ອະນຸມັດປັບປຸງມູນຄ່າກຳນົດ (Par Value) ເປັນ 2,000 ກີບຕໍ່ຮຸ້ນ, ອະນຸມັດການເພີ່ມທຶນຂອງບໍລິສັດຈາກເດີມ 10 ລ້ານ ກີບ ເປັນ 700 ຕື້ກີບ ເຊິ່ງບໍລິສັດ ໄດ່ປ່ຽນຮູບແບບວິສາຫະກິດ ຈາກ ບໍລິສັດພູສີ ຫຼວງພະບາງ ກໍ່ສ້າງ ແລະ ສອມແປາຂົວ -ທາງ ຈຳກັດດຽວ ມາເປັນ "<u>ບໍລິສັດ ພູສີກໍ່ສ້າງແລະ ພັດທະນາ ມະຫາຊົນ</u>" . ອີງຕາມກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 18 ພະຈິກ 2016 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນ ໄດ້ອະນຸມັດເລື່ອງທີ່ສຳຄັນ ຄື: ອະນຸມັດການເພີ່ມທຶນຈົດທະບຽນ 300 ຕື້ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 150 ລ້ານ ຮຸ້ນ , ມູນຄ່າກຳນົດ 2,000 ກີບຕໍ່ນຮຸ້ນ ເພື່ອການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ແລະ ຮອງຮັບ ການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX) ສົ່ງຜົນໃຫ້ບໍລິສັດຈະມີທຶນຈົດທະບຽນທັງໝົດ 1,000 ຕື້ກີບພາຍຫຼັງ IPO.

ປີ 2017		ໃນວັນທີ 9 ພຶດສະພາ 2017, ທາງຄະນະກຳມະການຄຸ້ມຄອງຫລັກຊັບ ໄດ້ອອກແຈ້ງການ ເລກທີ 220/LSCO ເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍມີການແນະນຳ ໃຫ້ຫຼຸດ ມູນຄ່າ ຮຸ້ນກຳນົດ (par value) ຈາກ 2,000 ກີບ ມາ ເປັນ 1,000 ກີບ ຕໍ່ ຮຸ້ນ ແລະ ໃຫ້ມີການ ຫຼຸດ ທຶນຈົດທະບຽນ ຈາກ 700 ຕື້ກີບ ເປັນ 500 ຕື້ກີບ ເຊິ່ງສຳເລັດການ ປ່ຽນ ທຶນຈົດທະບຽນ ທີ່ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນ ທີ 27 ເດືອນ 6 ປີ 2017. ໃນວັນທີ 02 ຕຸລາ 2017 ບໍລິສັດ ໄດ້ຈົດທະບຽນເພີ່ມທຶນ 82 ຕື້ກີບ ພາຍຫຼັງການອອກ ຈຳໜ່າຍຮຸ້ນ IPO ຈຶ່ງ ເຮັດໃຫ້ ທຶນຈົດທະບຽນຂອງ ບໍລິສັດ ທັງຫມົດ ເປັນ 582 ຕື້ກີບ. ໃນ ວັນທີ 10 ຕຸລາ 2017 ເປັນມື້ທີ່ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ມີການ ຈົດທະບຽນເຂົ້າຕະຫລາດຫລັກຊັບລາວ ແລະ ເປັນມື້ເປີດຂາຍຮຸ້ນ ສາມັນ ມື້ທຳອິດຂອງ ບໍລິສັດ ຊຶ່ງມີຮຸ້ນສາມັນຈຳນວນ 82 ລ້ານຮຸ້ນ ໃນລາຄາກຳນົດ (par value) 1,000 ກີບ ຕໍ່ ຮຸ້ນ. ລາຄາ ເປີດໂຕ ແມ່ນ 1,300 ກີບຕໍ່ຮຸ້ນ ແລະ ປິດການຂາຍໃນມື້ດັ່ງກ່າວໃນລາຄາ 1,350 ກີບ ແລະ ໃນວັນທີ 17/06/2025 ໄດ້ສຳເລັດການປ່ຽນແປງກຳນົດມູນຄ່າຮຸ້ນ (par value) ໃຫມ່ ຈາກ 1,000 ກີບ/ຮຸ້ນ ມາເປັນ 200 ກີບ/ຮຸ້ນ ແລະ ເຮັດໃຫ້ຈຳນວນຮຸ້ນທັງໝົດເພີ່ມຂຶ້ນ ຈາກ 582,000,000 ຮຸ້ນ ເປັນ 2,910,000,000 ຮຸ້ນ.

II. ທີ່ຕັ້ງສຳນັກງານ

- ຊັ້ນ 3 ອາຄານ ໂຮງແຮມຄອນຕິເນັນໂທພລາຊາວຽງຈັນ, ບ້ານໜອງບົວທອງໃຕ້, ເມືອງສີ ໂຄດຕະບອງ, ນະຄອນຫຼວງວຽງຈັນ.
- ໂທລະສັບ: +856 21 229696.
- ແຟັກ: 0856 21 265394
- E-Mail: info@pcdlao.com
- Website: www.pcdlao.com

III. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

<u>ວິໃສທັດ</u>

ບໍລິສັດຕັ້ງເປົ້າໝາຍຈະກ້າວຂຶ້ນມາເປັນຜູ້ນຳທາງດ້ານການກໍ່ສ້າງ, ເຕັກໂນໂລຊີ ແລະ ການພັດ ທະນາພາຍໃນ ປະເທດແລະຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນໃນອະນາຄົດ.

<u>ພາລະກິດ</u>

ບໍລິສັດຕັ້ງໃຈຢ່າງຍິ່ງທີ່ຈະສະໜອງການບໍລິການໃຫ້ແກ່ລູກຄ້າ ໃນລະດັບສາກົນຢ່າງຮອບດ້ານເຊັ່ນ: ຄຸນນະພາບ, ທັນກັບເວລາ, ເອົາໃສ່ໃຈໃນລາຍລະອຽດ ແລະຊື່ສັດ ເປັນຫຳ ຕໍ່ຄູ່ຮ່ວມງານແລະລູກຄ້າ.

<u>ຄຸນຄ່າທີ່ພວກເຮົາຍຶດຖື:</u>

P: ປະຕິບັດວຽກຢ່າງມີປະສິດທິພາບ
C: ຮັດແໜ້ນສາຍສຳພັນກັບຄູ່ຄ້າເປັນບຸລິມະສິດອັນດັບໜຶ່ງ.
D: ວຽກສຳເລັດຕາມກຳນົດເວລາ ແລະ ຮັບປະກັນຄຸນນະພາບ.

IV. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ

4.1 <u>ໂຄງຮ່າງການຈັດຕັ້ງ</u>

ສະພາບໍລິຫານ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ / Board of Directors



ທ່ານ ປອ ສີທອງ ພົມມະຈິດ ປະທານສະພາບໍລິຫານ PCD, ປະທານບໍລິສັດ ພູສີກຣຸບ
Ph.D Sithong PHOMMACHITH, **President of BoD of PCD , President of Phousy Group**



ທ່ານ ສີທາ ພົມມະຈິດ, ຮອງສະພາບໍລິຫານ PCD, ຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກຣຸບ
Mr. Sitha PHOMMACHITH, **Vice President of BoD of PCD, Chief Executive Officer of Phousy Group**



ທ່ານ ແພງ ດວງງືນ, ສະຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່ PCD
Mr. Pheng Douangngeun, **Member BoD of PCD, Chief Executive Officer of PCD**



ທ່ານ ນັນທະລັດ ທິລະກຸນ, ສະມາຊິກສະພາບໍລິຫານອິດສະຫຼະ

Mr. Nanthalath THILAKUN Member **BoD / Independent Member**



ທ່ານນາງ ໄຮທອງ, ສະມາຊິກສະພາບໍລິຫານ PCD, ຮອງຜູ້ອຳນວນການໃຫຍ່ຝ່າຍບັນຊີການເງິນ

Mrs. Haithong Phommachith Member **BoD**



ທ່ານ ພຸດທະເສນ ພົມມີໄຊ, ສະມາຊິກສະພາບໍລິຫານອິດສະຫຼະ


Mr. Phoutthasane Phommyxay Member **BoD/ Independent Member**



ທ່ານ ພູມສະຫວັນ ສຸນັນທອງ, ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່ ຝ່າຍ ພັດທະນາທຸລະກິດ ບໍລິສັດ ພູສີກຣຸບ

Mr. Phoutthasane Phommyxay Member **BoD**, Deputy CEO, Business Development of Phousy Group

ໂຄງຮ່າງການຈັດຕັ້ງ ບໍລິສັດ ພຸລິກ່ສ້າງ ແລະ ພັດທະນາ ມະຫານຊົນ



4.2 ຜູ້ຖືຮຸ້ນ

ຜູ້ຖືຮຸ້ນ	ອັດຕາສ່ວນກ່ອນການອອກຈຳໜ່າຍ ຮຸ້ນ IPO		ອັດຕາສ່ວນຫຼັງການອອກຈຳໜ່າຍຮຸ້ນ IPO	
	ຈຳນວນຮຸ້ນ	ອັດຕາສ່ວນ	ຈຳນວນຮຸ້ນ	ອັດຕາສ່ວນ
I. ກຸ່ມຜູ້ຖືຮຸ້ນເດີມ	2,500,000,000	100%	2,500,000,000	100%
1.1 ທ່ານ ປອ ສີທອງ ພົມມະຈິດ	2,075,000,000	83.00%	2,075,000,000	71.305%
1.2 ທ່ານ ນາງ ປ່ຽນຄຳ ພົມມະຈິດ	250,000,000	10.00%	250,000,000	8.591%
1.3 ທ່ານ ສີພອນ ອຸທຸມພອນ	25,000,000	1.00%	25,000,000	0.859%
1.4 ທ່ານ ນາງ ບົວພັນ ອຸທຸມພອນ	25,000,000	1.00%	25,000,000	0.859%
1.5 ທ່ານ ສີທາ ພົມມະຈິດ	25,000,000	1.00%	25,000,000	0.859%
1.6 ທ່ານ ນາງ ໄຮທອງ ພົມມະຈິດ	25,000,000	1.00%	25,000,000	0.859%
1.7 ທ່ານ ອຳພອນ ພົມມະຈິດ	25,000,000	1.00%	25,000,000	0.859%
1.8 ທ່ານ ນາງ ຕຸ້ຍບົວສີ ພົມມະຈິດ	25,000,000	1.00%	25,000,000	0.859%
1.9 ທ່ານ ນາງ ເພັດມະນີ ອຸທຸມພອນ	2,000,000	1.00%	25,000,000	0.859%
II.ນັກລົງທຶນທົ່ວໄປ			410,000,000	14.089%
	2500,000,000		2,910,000,000	

4.3 ສະພາບໍລິຫານ

ສະມາຊິກສະພາບໍລິຫານ ມີ 7 ທ່ານ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ປອ ສີທອງ ພົມມະຈິດ	ປະທານສະພາບໍລິຫານ
2	ທ່ານ ສີທາ ພົມມະຈິດ	ຮອງປະທານສະພາບໍລິຫານ
3	ທ່ານ ນັນທະລັດ ທິລາກຸນ	ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ
4	ທ່ານ ແພງ ດວງເງິນ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່
5	ທ່ານນາງ ໄຮທອງ ພົມມະຈິດ	ສະມາຊິກສະພາບໍລິຫານ
6	ທ່ານ ພຸດທະເສນ ພົມມີໄຊ	ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ
7	ທ່ານ ພູມສະຫວັນ ສຸນັນທອງ	ສະມາຊິກສະພາບໍລິຫານ

4.4 ຄະນະກຳມະການກວດສອບ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນັນທະລັດ ທິລາກຸນ	ປະທານຄະນະກຳມະການກວດສອບ
2	ທ່ານ ພຸດທະເສນ ພົມມີໄຊ	ຄະນະກຳມະການກວດສອບ
3	ທ່ານ ແພງ ດວງເງິນ	ຄະນະກຳມະການກວດສອບ

4.5 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນັນທະລັດ ທິລາກຸນ	ປະທານຄະນະກຳມະການຄຸມຄອລຄວາມສ່ຽງ
2	ທ່ານ ພຸດທະເສນ ພົມມີໄຊ	ຄະນະກຳມະການຄຸ້ມຄອງຄວາມສ່ຽງ
3	ທ່ານ ແພງ ດວງເງິນ	ຄະນະກຳມະການຄຸ້ມຄອງຄວາມສ່ຽງ

4.6 ຄະນະກຳມະການກຳນົດຄ່າຕອບແທນ


ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ພຸດທະເສນ ພົມມີໄຊ	ປະທານຄະນະກຳມະການກຳນົດຄ່າຕອບແທນ
2	ທ່ານ ປອ ສີທອງ ພົມມະຈິດ	ຄະນະກຳມະການກຳນົດຄ່າຕອບແທນ
3	ທ່ານ ແພງ ດວງເງິນ	ຄະນະກຳມະການກຳນົດຄ່າຕອບແທນ

5 ຄວາມຄືບໜ້າການດຳເນີນທຸລະກິດໃນປີ 2025

ການດຳເນີນວຽກງານດ້ານບຸກຄະລາກອນໃນປີ 2025 ແມ່ນໄດ້ເນັ້ນໜັກການຝຶກອົບຮົມ, ປັບປຸງໂຄງຮ່າງການຈັດຕັ້ງຂອງອົງກອນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ.
ດ້ານສະຫວັດດີການສັງຄົມ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດການສຳຫຼວດເພື່ອກະກຽມສະໜອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມກົດໝາຍແຮງງານລາວວ່າງອອກ.

ພົນງານຂອງປີ 2025

- ຈຳນວນພະນັກງານທັງໝົດຮອດວັນທີ: 31/12/2025 ມີຈຳນວນ 149 ຄົນ
- ການລາອອກ 0 ຄົນ
- ຮັບພະນັກງານໃຫມ່ 2 ຄົນ
- ຖືກເລື່ອນຕຳແໜ່ງ 0 ຄົນ



- ➢ ເງິນເດືອນ ແລະ ສະຫວັດດີການ
- ອັດຕາການເພີ່ມຂຶ້ນຂອງເງິນເດືອນ 0.05 %
  - ➢ ຈັດກິດຈະກຳສ້າງຄວາມສາມັກຄີໃນໝູ່ພະນັກງານ
  - ➢ ການສົ່ງເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານ
- ເຂົ້າຮ່ວມປະຊຸມສຳມະນາໃນຫຼາກຫຼາຍຫົວຂໍ້ກັບຕະຫຼາດຫຼັກຊັບລາວ ແລະ ສຄຄຊ
- ເຂົ້າຮ່ວມຝຶກອົບຮົມຍົກລະດັບຄວາມຮູ້ຄວາມສາມາດທັງພາຍໃນ ແລະ ຕ່າງປະເທດ

ວຽກງານການຕະຫຼາດ

ເນື່ອງຈາກບໍລິສັດເປັນຜູ້ໃຫ້ບໍລິການວຽກງານວິສະວະກຳກໍ່ສ້າງແບບຄົບວົງຈອນ ໂດຍເນັ້ນການໃຫ້ບໍລິການໃນສ່ວນວຽກພື້ນຖານໂຄງລ່າງ ເຊິ່ງສ່ວນໃຫຍ່ເຈົ້າຂອງໂຄງການຈະເປັນໜ່ວຍງານພາກລັດ ດັ່ງນັ້ນ, ການເຮັດການຕະຫຼາດຂອງບໍລິສັດຈະເນັ້ນໄປຍັງກຸ່ມເປົ້າໝາຍໜ່ວຍງານພາກລັດ ແລະ ເອກະຊົນ ໂດຍເນັ້ນການສົ່ງມອບໂຄງການທີ່ມີຄຸນະພາບ ທັນກັບເວລາ ເຊິ່ງເປັນປັດໄຈຫຼັກທີ່ຈະເຮັດໃຫ້ເຈົ້າຂອງໂຄງການມີຄວາມເຊື່ອໝັ້ນໃນຄຸນະພາບຂອງໂຄງການທີ່ບໍລິສັດເປັນຜູ້ກໍ່ສ້າງ ລວມເຖິງເປັນການສ້າງໂອກາດໃຫ້ບໍລິສັດໄດ້ຮັບວຽກເພີ່ມຕື່ມຈາກໜ່ວຍງານພາກລັດດັ່ງກ່າວ ນອກເໜືອຈາກນີ້,

ບໍລິສັດຍັງຕ້ອງສ້າງຄວາມສຳພັນອັນດີກັບໜ່ວຍງານພາກລັດ ໃນການໃຫ້ຂໍ້ມູນ ແລະ ແລກປ່ຽນຂໍ້ມູນທາງດ້ານວິຊາການ ທີ່ກ່ຽວກັບການກໍ່ສ້າງ ລວມເຖິງການສຶກສາ ຊອກຄົ້ນພື້ນທີ່ ເພື່ອພັດທະນາໂຄງການການກໍ່ສ້າງເສັ້ນທາງເພີ່ມຕື່ມ ອັນເປັນການເຮັດການຕະຫຼາດ ເຊິ່ງສິ່ງຜົນໃຫ້ບໍລິສັດມີໂອກາດອັນດີທີ່ຈະໄດ້ວຽກປະມູນໃນໂຄງການຕ່າງ ເພີ່ມຕື່ມອີກດ້ວຍ.

ໃນປະຈຸບັນ PCD ແມ່ນໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ຍັງບໍ່ທັນສຳເລັດ 2 ໂຄງການຄື: ໂຄງການກໍ່ສ້າງທາງ ປູຢາງ 2 ຊັ້ນ ແຕ່ບ້ານອຸ້ ນະຄອນຫຼວງພະບາງ ຫາ ບ້ານ ສີບຸນເຮືອງ ເມືອງ ນານ ແຂວງຫຼວງພະບາງລວຍາວ 50.2 ກິໂລແມດ ແລະ ໂຄງການກໍ່ສ້າງທາງຍີກລະດັບ ແຕ່ບ້ານກ໊ວເຈຍ ຫາ ບ້ານເມືອງຮຶບ ເມືອງໂພນທອງ ແຂວງຫຼວງພະບາງ ຄວາມຍາວ 32.565 ກິໂລແມັດ.

I- ແຜນໂຄງການສືບຕໍ່ຈັດຕັ້ງປະຕິບັດ

1. ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີມູນຄ່າທັງໝົດ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຄັດເລືອກເຂົ້າຮອບສຸດທ້າຍແມ່ນ ການສຳຫຼວດອອກແບບແລວທາງແມ່ນສຳເລັດແລ້ວປະຈຸບັນແມ່ນກະຊວງໂຍທາ ແລະ ຂົນສົ່ງກຳລັງກະກຽມ ຍື່ນແບບຕໍ່ລັດຖະບານເພື່ອຮັບຮອງ (ສະເພາະທີ່ບໍລິສັດພູສີຮັບຜິດຊອບແມ່ນ ຊ່ວງທີ 4 ແຕ່ ເຊໂນ ແຂວງ ສະຫວັນນະເຂດ ຫາ ນາ ປົງ ແຂວງສາລະວັນ, ລວງຍາວທັງມົດ 135.2 ກິໂລແມັດ ມູນຄ່າປະເມີນເບື້ອງຕົ້ນ ແມ່ນ 1.235,82 ລ້ານໂດລາສະຫະລັດ)
2. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນຮ່ວມ 25 %, ເປັນຜູ້ຮັບໝົ້າຫຼັກໃນການຂຸດຄົ້ນບໍ່ຖ່ານຫີນ ເມືອງວຽງພຸຄາ, ແຂວງຫຼວງນ້ຳທາ. ຄາດຄະເນມູນຄ່າການລົງທຶນ 5 ໂດລາ ຕໍ່ ໂຕນ, ລາຍຮັບ 12 ໂດລາ ຕໍ່ ໂຕນ (ໄດ້ຈາກຳໄລປັນຜົນ ແລະ ການລົງທຶນ ປະມານ 75 ລ້ານໂດລາ)
3. ຫມູ່ບ້ານຈັດສັນສະໄຫມ, ຄອນໂດມີນຽມ, ບ້ານວິນລ້າ ແລະ ລີຊີເດ້ນ ທີ່ເໝາະສຳລັບທ່ວໄປຈົນເຖິງໄຮເອັນ ຈຳນວນ 200,000 ຫລັງໃນທ່ວປະເທດ, ແມ່ນຍັງຊອກຫາຄູ່ຮ່ວມທຶນຈາກຕ່າງປະເທດ. ປັດຈຸບັນແມ່ນເລີ່ມ ຕົ້ນຈາກ 50,000 ຫຼັງ ຢູ່ແຂວງຫຼວງພະບາງ
4. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ເປັນຜູ້ຮັບໝົ້າຫຼັກ ໃນການພັດທະນາ ໂຄງການກໍ່ສ້າງພື້ນຖານ ໂຄງລ່າງເຂດເສດຖະກິດພິເສດ ຫຼວງພະບາງ ໃນເບື້ອງຕົ້ນໃນມູນຄ່າ 20,000,000 ໂດລາສະຫະລັດ
5. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ໄດ້ເຊົ່າເນື້ອທີ່ ໃນເຂດເສດຖະກິດພິເສດ ຫຼວງພະບາງ ເນື້ອທີ່ 500 ເຮັກຕາ ໃນການພັດທະນາອະສັງຫາລິມະຊັບເຊັ່ນ: ໃຫ້ເຊົ່າທີ່ດິນ ແລະ ເຊົ່າສາງ

II- ໂຄງການໃນແຜນປີ 2023-2030

1. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ສຳຫຼວດ-ອອກແບບ ແລະ ກໍ່ສ້າງເສັ້ນທາງດ່ວນເວ້ັນເມືອງ ແຕ່ຫຼັກ 21 ເມືອງໄຊທານີ ຫາ ບ້ານນາຂ່າ ເມືອງນາຊາຍທອງ ຄວາມຍາວ 33.15 ກມ ມູນຄ່າ 172,258,237.00 ໂດລາ
2. ໂຄງການສຳຫຼວດ-ອອກແບບ ແລະ ປັບປຸງເປັນເສັ້ນທາງຄອນກຣີດ ແຕ່ 3 ແຍກນາຄວາຍ ຫາ ຫຼັກ 21 ຄວາມຍາວ 13.9 ກມ
3. ໂຄງການ ສຳຫຼວດ-ອອກແບບ ທາງຊອຍ ແຕ່ບຶງທາດຫຼວງ ຫາ ສະຖານີລົດໄຟ ລາວ-ໄທ ຄຳສະຫວາດ ຄວາມຍາວ 2,5 ກມ.
4. ໂຄງການຟື້ນຟູເສັ້ນທາງ 5 ໂຄງການ: (ຍັງລໍຖ້າການຮັບຮອງມູນຄ່າ)

   - ແຕ່ 3 ແຍກ ຫາ 3 ແຍກ ບ້ານດອນເກົ້າ ນະຄອນຫຼວງພະບາງ ຄວາມຍາວ 30 ກມ.
   - ເສັ້ນທາງ ເລກ 4 ແຕ່ເມືອງຊຽງເງິນ ຫາສິ້ນຂົວນ້ຳຂອງ ແຂວງ ຫຼວງພະບາງ ຄວາມຍາວ 60 ກມ.
   - ແຕ່ 3 ແຍກ ບ້ານກິກ໊ົ້ວ ຫາ ບ້ານ ພອນໄຊ ນະຄອນຫຼວງພະບາງ ຄວາມຍາວ 16 ກມ

- ແຕ່ ບ້ານ ນາສ້າງເຫວີຍ ຫາສິ້ນຂົວນ້ຳຄານ ນະຄອນຫຼວງພະບາງ ຄວາມຍາວ 4.6 ກມ
- ແຕ່ປາກເຊືອງ ຫາ ເມືອງໂພນໄຊ ແຂວງ ຫຼວງພະບາງ ຄວາມຍາວ 64 ກມ.

5. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນຮ່ວມ 25 %, ເປັນຜູ້ຮັບເໝົາຫຼັກໃນການຂຸດຄົ້ນບໍ່ຖ່ານຫີນ ເມືອງວຽງພຸຄາ, ແຂວງຫຼວງນ້ຳທາ. ຄາດຄະເນມູນຄ່າການລົງທຶນ 5 ໂດລາ ຕໍ່ ໂຕນ, ລາຍຮັບ 12 ໂດລາ ຕໍ່ ໂຕນ (ໄດ້ຈຳໄລປັນຜົນ ແລະ ການລົງທຶນ ປະມານ 75 ລ້ານໂດລາ)
6. ໃນພະລັງງານໄຟຟ້າແສງອາທິດ 1,000 ເມັກກາວັດ. ຄາດຄະເນມູນຄ່າການລົງທຶນ 800 ລ້ານໂດລາ ດ້ວຍຜົນ ຕອບແທນ 12,8%
7. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແຜນການສຶກສາການລົງທຶນ ໂຄງການພະລັງງານໄຟຟ້ານ້ຳຕົກ ລວມ ເປັນ 1150 ເມັກກາວັດ
8. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ກະກຽມປະມູນໂຄງການ ໂຄງການ
   8.1. ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ຫຼວງພະບາງ ດ້ວຍທຶນ NEDA
   8.2. ໂຄງການກໍ່ສ້າງເສັ້ນທາງ R12 ດ້ວຍທຶນ NIDA
   8.3. ໂຄງການກໍ່ສ້າງການເຈື່ອນ ແຂວງຫຼວງພະບາງ ດ້ວຍທຶນ EDCF (ປະເທດເກົາຫຼີ)
   8.4. ໂຄງການກໍ່ສ້າງສະໜາມຂີ່ເຫຍື້ອ ແລະ ທາງຊອຍໃນຕົວເມືອງ ແຂວງຫຼວງພະບາງ ດ້ວຍທຶນ ທະນາຄານໂລກ World Bank

<u>ລັກສະນະກຸ່ມລູກຄ້າເປົ້າໝາຍ</u>

ກຸ່ມລູກຄ້າເປົ້າໝາຍຂອງບໍລິສັດສາມາດແບ່ງໄດ້ເປັນລູກຄ້າຈາກພາກລັດ ແລະ ພາກເອກະຊົນ ໂດຍສະເພາະແມ່ນ ການກໍ່ສ້າງພື້ນຖານໂຄງລ່າງທີ່ຢູ່ໃນເຂດພາກເໜືອຂອງປະເທດເປັນສ່ວນໃຫຍ່ ແລະ ຂະຫຍາຍໄປຍັງແຂວງອື່ນໆ ຫຼື ໃນ ຂົງເຂດທົ່ວປະເທດ. ແຜນການຕະຫຼາດ ແມ່ນເນັ້ນຫນັກໃສ່ພາກເອກະຊົນ ແລະ ຂະແໜງ ການພັດທະນາໃນການກໍ່ສ້າງ ໂຄງການຂະໜາດນ້ອຍ, ກາງ, ແລະ ໃຫຍ່ ຕາມລຳດັບ.

5.1 ການຊອກຫາໂຄງການ

ຊ່ອງທາງການຈັດຈຳໜ່າຍຂອງບໍລິສັດແມ່ນໄດ້ມີການຮັບວຽກກໍ່ສ້າງຈາກພາກລັດໂດຍກົງ ທັ້ງໂດຍການຍື່ນຊອງ ປະມູນເພື່ອສະເໜີລາຄາ ແລະ ການເຈລະຈາຕໍ່ລອງວຽກທີ່ຕ້ອງຕົກລົງກັບເຈົ້າຂອງໂຄງການ ໂດຍບໍລິສັດຈະໄດ້ຮັບຊອງ ປະມູນໂຄງການ ເພື່ອນຳມາປະມວນສະເໜີລາຄາຕາມຂໍ້ກຳນົດ ໃນບາງຄັ້ງບໍລິສັດໄດ້ສະເໜີໂຄງການໄປຍັງເຈົ້າຂອງ ໂຄງການໂດຍກົງ ເພື່ອພິຈາລະນາອະນຸມັດໂຄງການກໍ່ສ້າງເສັ້ນທາງດັ່ງກ່າວ. ແຕ່ທັ້ງນັ້ນ, ທາງເຈົ້າຂອງໂຄງການ ຕ້ອງເຂົ້າ ມາກວດສອບຄວາມເປັນໄປໄດ້ຂອງການກໍ່ສ້າງເສັ້ນທາງ ຫຼື ໂຄງການ ດັ່ງກ່າວ. ເພື່ອສຶກສາຄວາມເປັນໄປໄດ້ໃນ ໂຄງການນັ້ນໆ. ເພື່ອເປັນການຫຼຸດຄວາມສ່ຽງຈາກການແຂ່ງຂັນໃນການປະມູນໂຄງການ.

5.2 ກົນລະຍຸດການແຂ່ງຂັນ

ບໍລິສັດແມ່ນມີນະໂຍບາຍທີ່ຈະເພີ່ມວຽກງານກໍ່ສ້າງໃຫ້ຫຼາຍເພີ່ມຂຶ້ນ ທັ້ງໃນຮູບແບບຂອງໂຄງການທາງພາກລັດ ແລະ ເອກະຊົນ ເພື່ອເຮັດໃຫ້ບັນລຸເປົ້າໝາຍຫຼັກຂອງບໍລິສັດ ເປັນບໍລິສັດຜູ້ນຳທາງດ້ານການກໍ່ສ້າງ ແລະ ພັດທະນາໃນ ປະເທດ ແລະ ຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນ. ບໍລິສັດໄດ້ພັດທະນາກົນລະຍຸດຂອງການ ແຂ່ງຂັນເອົາໄວ້ດັ່ງຕໍ່ໄປນີ້ ເຊິ່ງຊ່ວຍໃຫ້ເກີດປະໂຫຍດໃນດ້ານການແຂ່ງຂັນ ແລະ ເພື່ອບັນລຸເປົ້າໝາຍຂອງບໍລິສັດ.

ກ. ບໍລິສັດຮັບເໝົາກໍ່ສ້າງແບບຄົງວິງຈອນ

ບໍລິສັດເປັນບໍລິສັດຮັບເໝົາກໍ່ສ້າງແບບຄົງວິງຈອນ ແລະ ມີຄວາມພ້ອມໃນການສະເໜີໂຄງການ ຫຼື ມີຄວາມພ້ອມໃນການເຂົ້າປະມູນໂຄງການທັ້ງຂອງໂຄງການພາກລັດ ແລະ ພາກເອກະຊົນ ເຮັດໃຫ້ສິ່ງຜົນດີຕໍ່ຜົນປະກອບການ ຈະເຮັດໃຫ້ບໍລິສັດສາມາດເຂົ້າເປັນສ່ວນໜຶ່ງໃນຜູ້ນຳດ້ານອຸດສາຫະກຳການກໍ່ສ້າງຊັ້ນນຳຂອງປະເທດ ເລືອກລົງທຶນໃນອຸດສາຫະກຳພື້ນຖານໂຄງລ່າງເປັນຫຼັກ ແລະ ໂຄງການໃນພາກອະສັງຫາລິມະຊັບ ແນໃສ່ຄວາມຮູ້ ຄວາມຊ່ຽວຊານດ້ານເຕັກນິກການກໍ່ສ້າງຂອງບຸກຄະລາກອນ, ການນຳໃຊ້ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ ແນໃສ່ການແຂ່ງຂັນໃນໂຄງການທີ່ມີຂະໜາດໃຫຍ່ ແລະ ສະລັບຊັບຊ້ອນຫຼາຍຂຶ້ນ. ການມີແຫຼ່ງວັດສະດຸກໍ່ສ້າງ ແລະ ແຮງງານທີ່ມີປະສົບການ ໃນການກໍ່ສ້າງຢ່າງກວ້າງຂວາງ, ອັນເຮັດໃຫ້ເປັນຜົນສຳເລັດຂອງບໍລິສັດ.

ຂ. ຄຸນະພາບ ແລະ ມາດຕະຖານຂອງວຽກງານ

ການຮັກສາຄຸນະພາບ ແລະ ມາດຕະຖານຂອງວຽກງານ ເປັນເຫດຜົນຫຼັກທີ່ບໍລິສັດປະສົບຜົນສຳເລັດທີ່ມາຈາກປະຫວັດການດຳເນີນວຽກງານທີ່ດີຂອງບໍລິສັດ ທັ້ງໃນດ້ານການເຮັດວຽກໃຫ້ແລ້ວຕາມກຳນົດເວລາ, ຄວາມໜ້າເຊື່ອຖື ແລະ ຄຸນະພາບຂອງວຽກງານ ມີຄວາມສາມາດໃນການດຳເນີນງານຕາມສັນຍາ ແລະ ການບໍລິການລູກຄ້າດ້ວຍນ້ຳໃຈໃຫ້ເປັນຢ່າງດີ ເອົາໃຈໃສ່ໃນລາຍລະອຽດ ແລະ ຊື່ສັດຕໍ່ລູກຄ້າ.

ຄ. ການສົ່ງມອບໃຫ້ທັນກັບເວລາທີ່ກຳນົດ

ວຽກງານກໍ່ສ້າງພື້ນຖານໂຄງລ່າງ ໂດຍສະເພາະແມ່ນຖະໜົນຫົນທາງເປັນວຽກທີ່ໃຫຍ່ ຕ້ອງໃຊ້ໄລຍະເວລາຍາວນານພໍສົມຄວນ ບໍລິສັດແມ່ນຕ້ອງການສົ່ງມອບງານໃຫ້ທັນກັບເວລາ ໃນແບບແຜນການທີ່ໄດ້ກຳນົດໄວ້ ເຊິ່ງບໍລິສັດເອງແມ່ນມີຊື່ສຽງໃນດ້ານການສົ່ງມອບງານໃນກົງກັບເວລາຖືໄດ້ວ່າເປັນໜຶ່ງປັດໄຈຫຼັກໃນການປະສົມຜົນສຳເລັດຂອງທຸລະກິດຮັບເໝົາກໍ່ສ້າງທີ່ຕ້ອງໃຊ້ຄວາມຮັບຜິດຊອບທີ່ສູງມາເປັນໄລຍະເວລາຍາວນານ

ບໍລິສັດແມ່ນມີການບໍລິຫານງານຢ່າງເປັນລະບົບ ມີການວາງແຜນງານທຸກຂັ້ນຕອນ ພັດທະນາສັກກະຍະພາບການເຮັດວຽກຂອງບຸກຄະລາກອນຢ່າງຕໍ່ເນື່ອງ ເພື່ອໃຫ້ການປະຕິບັດງານມີປະສິດທິພາບ ແລະ ສຳເລັດພາຍໃນລະຍະເວລາທີ່ກຳນົດໄວ້.

ງ. ເອົາໃຈໃສ່ໃນລາຍລະອຽດຂອງໂຄງການ

ບໍລິສັດແມ່ນມີການເອົາໃຈໃສ່ໃນລາຍລະອຽດໂຄງການຢ່າງຮອບຄອບໃນໂຄງການຕ່າງໆ ດ້ວຍຜູ້ບໍລິ ຫານ ແລະ ນັກວິສະວະກອນທີ່ມີປະສົບການສູງ, ມີຄວາມຊຳນານໃນການກໍ່ສ້າງຂົວ-ທາງ ແລະ ກໍ່ສ້າງອື່ນໆ ເພື່ອກວດສອບກິດຈະກຳໃນວຽກການກໍ່ສ້າງແຕ່ລະໂຄງການ ເຊິ່ງຊ່ວຍໃຫ້ບໍລິສັດມີການປັບປຸງປະສິດທິພາບຢູ່ສະເໝີ ແລະ ຫຼຸດຜ່ອນຕົ້ນທຶນການກໍ່ສ້າງໃນຮູບແບບຕ່າງໆ. ນອກຈາກນີ້, ບໍລິສັດມີແຜນວຽກງານທີ່ຈະບັນລຸເປົ້າໝາຍໂດຍພັດທະນາທາງດ້ານແນວຄິດໃນດ້ານການບໍລິຫານ, ການນຳໃຊ້ເຕັກໂນໂລຊີສະໄໝໃໝ່ ເພື່ອຊ່ວຍໃນການປັບປຸງປະສິດທິພາບ ແລະ ຫຼຸດຜ່ອນຕົ້ນທຶນການກໍ່ສ້າງໃນຮູບແບບຕ່າງໆຕໍ່ໄປ.

ຈ. ຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານ

ການທີ່ບໍລິສັດແມ່ນມີຄວາມ ຊື່ສັດ ຈິງໃຈ ແລະ ເປັນທຳ ກັບພາກສ່ວນທີ່ກ່ຽວຂ້ອງທັ້ງໃນພາກສ່ວນທີ່ກ່ຽວຂ້ອງກັບເຈົ້າຂອງໂຄງການ ທັ້ງຜູ້ອອກແບບ ແລະ ຜູ້ຄວບຄຸມວຽກ ເນື່ອງຈາກວ່າຜູ້ອອກແບບເປັນຜູ້ບຸກຄົນທີ່ຮູ້ກ່ຽວກັບລາຍລະອຽດຂອງໂຄງການກໍ່ສ້າງຕ່າງໆ ເຊິ່ງການທີ່ ຊື່ສັດ ຈິງໃຈ ຍ້ອນເຫດຜົນນີ້ເອງ ຕັ້ງແຕ່ອະດີດທີ່ຜ່ານມາ ຈຶ່ງເຮັດໃຫ້ບໍລິສັດກ້າວຂຶ້ນເປັນບໍລິສັດທີ່ມີຊື່ສຽງ ມີຄວາມສຳພັນທີ່ດີກັບລູກຄ້າ ມີຄວາມສຳພັນທີ່ດີກັບຜູ້ອອກແບບ ຜູ້ຄວບຄຸມວຽກ ແລະ ຄູ່ຮ່ວມງານທຸກຝ່າຍມາໂດຍຕະຫຼອດ.

ສ. ການໄດ້ຮັບຄວາມເຊື່ອຖື ແລະ ໄວ້ວາງໃຈຈາກລູກຄ້າ

ຈາກຜົນງານຄວາມສຳເລັດໃນອະດີດທີ່ຜ່ານມາຂອງບໍລິສັດ ແມ່ນໄດ້ຮັບຄວາມໄວ້ວາງໃຈຈາກລູກຄ້າ ໄດ້ເປັນຢ່າງດີ ເຮັດໃຫ້ບໍລິສັດແມ່ນໄດ້ຮັບການຍອມຮັບຈາກລູກຄ້າເຈົ້າຂອງໂຄງການ. ແລະໄດ້ຮັບການຕິດຕໍ່ຈາກໜ່ວຍງານພາກລັດໃຫ້ບໍລິສັດເຂົ້າຮ່ວມປະມູນໂຄງການຢ່າງຕໍ່ເນື່ອງ.

5.3 ວຽກງານດ້ານຍຸດທະສາດອົງກອນ

ຈາກຄວາມຕັ້ງໃຈໃນການມອບສິ່ງທີ່ດີທີ່ສຸດ ສູ່ຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈທີ່ໄດ້ຮັບຈາກລູກຄ້າ, ພວກເຮົາພ້ອມແລ້ວທີ່ຈະກ້າວໄປສູ່ເປົ້າໝາຍໃນອະນາຄົດ:

1. ຂະຫຍາຍຖານລູກຄ້າໄປສູ່ພາກເອກກະຊົນ ທັ້ງໃນໂຄງການກໍ່ສ້າງແລະພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.
2. ລິເລີ່ມໂຄງການພັດທະນາອະສັງຫາລິມະຊັບເພື່ອຕອບສະໜອງການຂະຫຍາຍຕົວຂອງຕົວເມືອງໃນທົ່ງປະເທດ.
3. ຮັກສາຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກຖານລູກຄ້າທີ່ໄດ້ຮັບມາຕະຫຼອດໄລຍະເກືອບ 30 ປີ ດ້ວຍການໃຫ້ຄວາມສຳຄັນກັບຄຸນນະພາບ, ມາດຕະຖານ ການສົ່ງມອບງານກົງເວລາ ແລະ ບໍລິການທີ່ຊື່ສັດໃສ່ໃຈທຸກລາຍລະອຽດ.

ຜູ້ອຳນວຍການໃຫຍ່

ໜ່ວຍງານກວດກາພາຍໃນຂອງບໍລິສັດ

ບໍລິສັດ ພຸສີ່ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ທ່ານ ໂຊນາ ບານທະວົງ

ທ່ານ ແພງ ດວງເງິນ

ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2025

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ເຖິງ ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ຄຳເຫັນ

ພວກເຮົາມີຄວາມເຫັນວ່າ, ເອກະສານລາຍງານການເງິນ ຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ບໍລິສັດ) ສຳລັບປີສິ້ນສຸດ 31 ທັນວາ 2025 ໄດ້ຖືກກະກຽມ, ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ໂດຍສອດຄ່ອງກັບນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ໃນເອກະສານລາຍງານການເງິນສະບັບນີ້.

ການກວດສອບຂອງພວກເຮົາມີ

ເອກະສານລາຍງານການເງິນຂອງ ບໍລິສັດ ປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2025;
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນ ຫົວຂໍ້ ຄວາມຮັບຜິດຊອບ ຂອງຜູ້ກວດສອບອິດສະຫຼະສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີນານາຊາດ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code) ຕາມທີ່ເໝາະສົມຕໍ່ການກວດສອບ ເອກະສານລາຍງານການເງິນ ຂອງຫນ່ວຍງານທີ່ມີຜົນປະໂຫຍດຕໍ່ສາທາລະນະ. ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ IESBA Code.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

www.pwc.com

ຄວາມບໍ່ແນ່ນອນທີ່ສຳຄັນ ທີ່ກ່ຽວຂ້ອງກັບການດຳເນີນງານຢ່າງຕໍ່ເນື່ອງ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2.1 ຂອງເອກະສານລາຍງານການເງິນ, ເຊິ່ງບົ່ງບອກວ່າໃນວັນທີ 31 ເດືອນທັນວາ ປີ 2025, ສະຖານະການເງິນຂອງບໍລິສັດທີ່ໜີ້ສິນໝຸນວຽນ ເກີນຊັບສິນໝຸນວຽນ ເປັນຈຳນວນ 201,667 ລ້ານກີບ (ບໍ່ລວມ ລາຍການລະ ວ່າງກັນ ຂອງພາກສ່ວນທີ່ກ່ຽວຂ້ອງ ສຸດທິ). ນອກຈາກນີ້, ບໍລິສັດມີການກູ້ຢືມເງິນລວມຈຳນວນ 154,596 ລ້ານກີບ (ບົດອະທິບາຍ ຂໍ້ 9) ເຊິ່ງຄົບກຳນົດຊຳລະທັງໝົດໃນວັນທີ 29 ເດືອນທັນວາ ປີ 2025 ແລະ ຫຼັງຈາກວັນທີ່ຂອງລາຍງານນີ້, ເງິນກູ້ດັ່ງກ່າວຍັງຄົງຄ້າງຊຳລະຢູ່. ລາຍຮັບສຳລັບປີ 2025 ເທົ່າກັບສູນ ແລະ ກະແສເງິນສົດຈາກກິດຈະກຳດຳເນີນງານເປັນລົບ. ລາຍຮັບຂອງບໍລິສັດຂຶ້ນຢູ່ກັບໂຄງການຈາກ ລັດຖະບານ ສປປ ລາວ ເຊິ່ງຂຶ້ນຢູ່ກັບງົບປະມານປະຈຳປີຂອງລັດຖະບານ ສປປ ລາວ. ນອກຈາກນີ້, ບໍລິສັດມີຈຳນວນເງິນຄ້າງຊຳລະຈາກຄູ່ ສັນຍາທີ່ກ່ຽວຂ້ອງເປັນໄລຍະເວລາດົນ ລວມເປັນເງິນທັງໝົດ 470,964 ລ້ານກີບ(ບົດອະທິບາຍ ຂໍ້ 4). ເຫດການເຫຼົ່ານີ້ໄດ້ລະບຸໄວ້ ໃນບົດ ອະທິບາຍຊ້ອນທ້າຍທີ 2.1, ຊີ້ໃຫ້ເຫັນເຖິງຄວາມບໍ່ແນ່ນອນທີ່ສຳຄັນ ທີ່ອາດຈະເຮັດໃຫ້ເກີດຄວາມສົງໃສໃນຄວາມສາມາດຂອງບໍລິສັດໃນ ການດຳເນີນງານຢ່າງຕໍ່ເນື່ອງ. ຄວາມຄິດເຫັນຂອງພວກເຮົາບໍ່ໄດ້ຖືກດັດແກ້ ກ່ຽວກັບເລື່ອງນີ້.

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານໃນການກະກຽມ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານໃນການກະກຽມ. ເອກະສານລາຍງານການເງິນ ແມ່ນຖືກກະກຽມຕາມນະໂຍບາຍບັນຊີຂອງບໍລິສັດ ເຊິ່ງພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດ ລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ມາດຕະຖານການບັນຊີ IFRS. ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ ມາດຕະຖານການບັນຊີ IFRS. ທັ້ງນີ້ຄຳເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດ ສອບເອກະສານລາຍງານການເງິນສຳລັບປີສິ້ນສຸດນີ້. ພວກເຮົາໄດ້ນຳເນື້ອໃນ ໜຶ່ງຫົວຂໍ້ສຳຄັນມາລວມໃນການກວດສອບເອກະສານລາຍງານການ ເງິນຄື ຄ່າເຜື່ອບັນຊີໜີ້ຕ້ອງຮັບສົງໄສຈະສູນ ເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳ ລັບເລື່ອງເຫຼົ່ານີ້. ນອກເໜືອຈາກເລື່ອງທີ່ອະທິບາຍໄວ້ໃນຄວາມບໍ່ແນ່ນອນທີ່ສຳຄັນ ທີ່ກ່ຽວຂ້ອງກັບການດຳເນີນງານຢ່າງຕໍ່ເນື່ອງ. ພວກເຮົາໄດ້ກຳ ນົດ ເລື່ອງສຳຄັນ ທີ່ອະທິບາຍຂ້າງລຸ່ມນີ້ເປັນ ເລື່ອງສຳຄັນ ໃນການກວດສອບ ທີ່ຈະຖືກສື່ສານ ໃນບົດລາຍງານຂອງພວກເຮົາ.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ຄ່າເຜື່ອບັນຊີໜີ້ຕ້ອງຮັບສົງໄສຈະສູນ ອີງຕາມບົດອະທິບາຍທີ 2.4 'ສະຫຼຸບລວມວິທີການບັນຊີທີ່ສຳຄັນ - ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ' ແລະ ບົດອະທິບາຍ ທີ 4 'ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ' ໃນ ເອກະສານລາຍງານການເງິນ. ໃນວັນທີ 31 ທັນວາ 2025, ໜີ້ຕ້ອງຮັບທາງການຄ້າ - ລັດຖະບານ ຂອງ ສປປ ລາວ (ລັດຖະບານ), ເຊິ່ງເປັນລູກຄ້າລາຍດຽວຂອງ ບໍລິສັດ ທີ່ມີຍອດຄ້າງຊຳລະ ຈຳນວນ 222,698 ລ້ານກີບ, ເຊິ່ງຄິດ ເປັນ 22% ຂອງຊັບສິນທັງໝົດ. ບໍລິສັດໄດ້ຫັກຄ່າເຜື່ອບັນຊີໜີ້ຕ້ອງ ຮັບສົງໄສຈະສູນ ຈຳນວນ 222,698 ລ້ານກີບ, ເຊິ່ງໄດ້ສະແດງມູນ ຄ່າຍັງເຫຼືອຕາມບັນຊີສຸດທິ ຈຳນວນ 0 ກີບ.	ຂັ້ນຕອນສຳຄັນຂອງພວກເຮົາລວມເຖິງຕໍ່ໄປນີ້: • ສອບຖາມຜູ້ບໍລິຫານກ່ຽວກັບວິທີການທີ່ໃຊ້ ລວມເຖິງຂໍ້ ສົມມຸດຕິຖານ ແລະ ສ້າງຄວາມເຂົ້າໃຈກ່ຽວກັບຂັ້ນຕອນ ຂອງຜູ້ບໍລິຫານ ແລະ ນະໂຍບາຍສຳລັບການຕັ້ງຄ່າເຜື່ອບັນຊີ ໜີ້ສົງໄສຈະສູນ; • ກວດສອບໜັງສືສື່ສານກັບລັດຖະບານ ແລະ ສະຖານະຂອງ ການເຈລະຈາທີ່ກຳລັງດຳເນີນຢູ່ເພື່ອປະເມີນຄວາມໜ້າຈະ ເປັນຂອງການຊຳລະເງິນໃນອານາຄົດ; • ກວດສອບການເກັບເງິນສົດເປັນຕົວຢ່າງໃນລະຫວ່າງປີ ແລະ ຫຼັງສິ້ນປີ ແລະ ປະເມີນວ່າການຍ້ອນກັບຂອງຄ່າເຜື່ອທີ່ ກ່ຽວຂ້ອງໄດ້ຮັບການຮັບຮູ້ຢ່າງເໝາະສົມຫຼືບໍ່; ແລະ

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ເລື່ອງສຳຄັນໃນການກວດສອບ (ຕໍ່)

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ຝ່າຍຜູ້ບໍລິຫານກຳລັງເຈລະຈາເລື່ອງເງື່ອນໄຂການຊຳລະເງິນທີ່ປັບປຸງກັບລັດຖະບານ. ໃນປີນີ້ຈຳນວນ 4,845 ລ້ານກີບຈົນເຖິງວັນທີຂອງບົດລາຍງານ ແລະ ຄ່າເຜື່ອບັນຊີໜີ້ຕ້ອງຮັບສິງໄສຈະສູນ ສຳລັບໜີ້ຕ້ອງຮັບແມ່ນ ໄດ້ປັບຄືນດ້ວຍມູນຄ່າດຽວກັນ. ສິ່ງຜົນກະທົບຕໍ່ທຶນໝຸນ ວຽນ. ເງື່ອນໄຂການຊຳລະເງິນ ຂຶ້ນຢູ່ກັບງົບປະມານປະຈຳປີ ຂອງລັດຖະບານ ຈຶ່ງມີຄວາມບໍ່ແນ່ນອນກ່ຽວກັບໄລຍະເວລາ ແລະ ຈຳນວນເງິນທີ່ຈະໄດ້ຮັບໃນອານາຄົດ ລວມເຖິງ ການຍ້ອນກັບທີ່ກ່ຽວຂ້ອງ ເຊິ່ງອາດສົ່ງຜົນຢ່າງມີວິໄນສຳຄັນຕໍ່ກຳໄລ ຫຼື ຂາດທຶນ ແລະ ເງິນທຶນໝຸນວຽນ ຈຳເປັນຕ້ອງໃຊ້ດຸນລະພິນິດຢ່າງຫຼາຍໃນການປະເມີນການຍ້ອນກັບໃນອານາຄົດທີ່ເປັນໄປໄດ້ ໂດຍອີງຈາກການຈັດເກັບໃນອາດີດ ແລະ ຂໍ້ມູນອື່ນໆທີ່ມີຢູ່. ພວກເຮົາໃຫ້ຄວາມສຳຄັນໃນເລື່ອງນີ້ ເນື່ອງຈາກມູນຄ່າຂອງຍອດຄົງເຫຼືອ ແລະ ຄວາມບໍ່ແນ່ນອນທີ່ກ່ຽວຂ້ອງກັບການໄດ້ຮັບເງິນຄືນໃນອານາຄົດ ແລະ ການຍ້ອນກັບຂອງຄ່າເຜື່ອ.	• ປະເມີນຄວາມພຽງພໍຂອງຄ່າເຜື່ອໜີ້ສົງໄສຈະສູນ ແລະ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງກັບຄວາມບໍ່ແນ່ນອນຂອງການຮຽກເກັບເງິນຄືນໃນອານາຄົດ ຈາກຂັ້ນຕອນຂ້າງເທິງ ພວກເຮົາສະຫຼຸບໄດ້ວ່າການປະເມີນຂອງຝ່າຍຜູ້ບໍລິຫານກ່ຽວກັບການຕັ້ງປະມານການລູກໜີ້ທີ່ມີຄວາມສ່ຽງ ແລະ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງ ເປັນໄປຢ່າງສົມເຫດສົມຜົນ ແລະ ມີຫຼັກຖານການກວດສອບທີ່ເໝາະສົມ ແລະ ພຽງພໍສະໜັບສະໜຸນ.

ຂໍ້ມູນອື່ນ

ຜູ້ອຳນວຍການ ມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານປະຈຳປີ (ແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ). ເຊິ່ງຄາດວ່າຈະໄດ້ຮັບຂໍ້ມູນດັ່ງກ່າວ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ບໍ່ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນອື່ນ.

ຄວາມຮັບຜິດຊອບຂອງພວກເຮົາຕໍ່ການກວດສອບເອກະສານລາຍງານການເງິນຄື ການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນທີ່ມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫລື ກັບຄວາມຮູ້ທີ່ໄດ້ມາຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບຮັບຮູ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ຄວາມຮັບຜິດຊອບ ຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການ ມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການ ໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການ ມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ອຳນວຍການ ເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນ.

ຄວາມຮັບຜິດຊອບ ຂອງຜູ້ກວດສອບ ສຳລັບການກວດສອບເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມທັງການອອກຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.

- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕ໊ອຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່ ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານການເງິນ, ຖ້າຫາກການເປີດເຜີຍ ດັ່ງກ່າວ ບໍ່ພຽງພໍຈະເຮັດໃຫ້ ການສະແດງຄວາມເຫັນຂອງພວກເຮົາຈະປ່ຽນແປງໄປຂໍ້ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍ່ຕາມ ເຫດການ ຫຼື ສະພາບຕ໊ອຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນການໄດ້ຢ່າງຕໍ່ເນື່ອງ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ ບຸກຄົນພາຍນອກອາດພິຈາລະນາເຖິງການກະທົບຕໍ່ຄວາມເປັນອິດສະຫຼະຂອງພວກເຮົາ ແລະ ຖ້າເປັນໄປໄດ້, ການປະຕິບັດເພື່ອລົບລ້າງ ປ້ອງກັນ ໄພຂົ່ມຂູ່ ຫຼື ການປົກປ້ອງ ທີ່ຖືກນຳໃຊ້.

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ທ່ານ ພິງພັນ ດຳຣົງພັນອຸດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
5 ພຶດສະພາ 2026

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ລ້ານກີບ	2024 ລ້ານກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	186	371
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	498,124	458,222
ເຄື່ອງໃນສາງ		318	318
ຊັບສິນໝຸນວຽນອື່ນໆ	6	304	306
ລວມຊັບສິນໝຸນວຽນ		**498,932**	**459,217**
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	7	308,181	321,056
ຊັບສົມບັດຄົງທີ່ເພື່ອການລົງທຶນ	5	189,442	189,442
ເງິນໃຫ້ກູ້ຢືມໄລຍະຍາວແກ່ພາກສ່ວນທີ່ກ່ຽວຂ້ອງ		505	505
ລວມຊັບສິນບໍ່ໝຸນວຽນ		**498,128**	**511,003**
ລວມຊັບສິນ		**997,060**	**970,220**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	8	92,970	118,313
ເງິນກູ້ຢືມໄລຍະຍາວ - ສະຖາບັນການເງິນ	9	154,596	116,096
ໜີ້ຕ້ອງສົ່ງອາກອນກຳໄລ	10	6,074	6,206
ໜີ້ສິນໝຸນວຽນອື່ນໆ	11	58,099	42,320
ລວມໜີ້ສິນໝຸນວຽນ		**311,739**	**282,935**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	9	-	38,500
ລວມໜີ້ສິນບໍ່ໝຸນວຽນ		**-**	**38,500**
ລວມໜີ້ສິນ		**311,739**	**321,435**
ທຶນ			
ທຶນຈົດທະບຽນ	12	582,000	582,000
ສ່ວນເກີນມູນຄ່າຮຸ້ນ	12	12,540	12,540
ກຳໄລສະສົມ			
ສຳຮອງຕາມລະບຽບການ	13	24,801	21,147
ບໍ່ໄດ້ຈັດສັນ		65,980	33,098
ລວມທຶນ		**685,321**	**648,785**
ລວມໜີ້ສິນ ແລະ ທຶນ		**997,060**	**970,220**

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 5 ພຶດສະພາ 2026

ທ່ານ ນາງ ໄຮທອງ ພົມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 5 ພຶດສະພາ 2026

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-23 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານຜົນໄດ້ຮັບ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2025

	ຍົດ ອະທິບາຍ	2025 ລ້ານກີບ	2024 ລ້ານກີບ
ລາຍຮັບຈາກການກໍ່ສ້າງ		-	400
ຕົ້ນທຶນໃນການກໍ່ສ້າງ		-	(269)
ກຳໄລເບື້ອງຕົ້ນ		**-**	**131**
ກຳໄລຈາກການຂາຍຊັບສິນ, ສຸດທິ		45,192	71,018
ກຳໄລ/(ຂາດທຶນ) ຈາກຄ່າເຜື່ອປັບຊີໜີ້ສິງໃສຈະສູນ, ສຸດທິ	4	4,845	(24,003)
ລາຍຮັບຄ່າເຊົ່າດິນ		9,632	9,552
ລາຍຮັບທາງການເງິນ		-	134
ລາຍຈ່າຍບໍລິຫານ		(3,506)	(3,376)
ຂາດທຶນ ຈາກອັດຕາແລກປ່ຽນ		(3,512)	(187)
ລາຍຈ່າຍທາງການເງິນ		(16,115)	(16,889)
ກຳໄລ ກ່ອນລາຍຈ່າຍອາກອນກຳໄລ		**36,536**	**36,380**
ລາຍຈ່າຍອາກອນກຳໄລ	17	-	(12)
ກຳໄລ ສຳລັບປີ		**36,536**	**36,368**
ກຳໄລ ຕໍ່ຮຸ້ນ			
ກຳໄລ ພື້ນຖານຕໍ່ຮຸ້ນ	18	19.74	19.65

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 5 ພຶດສະພາ 2026

ທ່ານ ນາງ ໄຣທອງ ພິມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 5 ພຶດສະພາ 2026

ຍົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-23 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2025

	ຫຍໍ້ ອະທິບາຍ	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ກຳໄລ ສະສົມ ສຳຮອງ ຕາມລະບຽບການ ລ້ານກີບ	ກຳໄລ ສະສົມ ຍັງບໍ່ໄດ້ຈັດສັນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາໃນວັນທີ 1 ມັງກອນ 2025	12,13	**582,000**	**12,540**	**21,147**	**33,098**	**648,785**
ກຳໄລສຳລັບປີ		-	-	-	36,536	36,536
ສຳຮອງຕາມລະບຽບການ	13	-	-	3,654	(3,654)	-
ຍອດຄົງເຫຼືອວັນທີ 31 ທັນວາ 2025		**582,000**	**12,540**	**24,801**	**65,980**	**685,321**
ຍອດຍົກມາໃນວັນທີ 1 ມັງກອນ 2024	12,13	**582,000**	**12,540**	**17,510**	**13,171**	**625,221**
ກຳໄລສຳລັບປີ		-	-	-	36,368	36,368
ຈ່າຍເງິນປັນຜົນ		-	-	-	(12,804)	(12,804)
ສຳຮອງຕາມລະບຽບການ	13	-	-	3,637	(3,637)	-
ຍອດຄົງເຫຼືອວັນທີ 31 ທັນວາ 2024		**582,000**	**12,540**	**21,147**	**33,098**	**648,785**

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 5 ພຶດສະພາ 2026

ທ່ານ ນາງ ໄຮທອງ ພິມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 5 ພຶດສະພາ 2026

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-23 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ລ້ານກີບ	2024 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລ ກ່ອນອາກອນກຳໄລສຳລັບປີ		36,536	36,380
ການດັດແກ້:			
- ຂາດທຶນ/(ກຳໄລ) ຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		3,537	(47)
- ຄ່າຫຼ້ຍຫ້ຽນ	7	78	84
- ລາຍຈ່າຍທາງການເງິນ		16,115	16,889
- ກຳໄລຈາກການຂາຍຊັບສິນ, ສຸດທິ		(45,192)	(63,048)
- (ກຳໄລ)/ຂາດທຶນ ຈາກຄ່າເຜື່ອບັນຊີໜີ້ສິງໄສຈະສູນ, ສຸດທິ	4	(4,845)	24,003
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**6,229**	**14,261**
ການປ່ຽນແປງຂອງຊັບສິນດຳເນີນງານ:			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(10,700)	152,759
- ເຄື່ອງໃນສາງ		-	2
- ຊັບສິນໝຸນວຽນອື່ນໆ		2	-
ການປ່ຽນແປງໜີ້ສິນດຳເນີນງານ:			
- ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(25,370)	(99,884)
- ໜີ້ສິນໝຸນວຽນອື່ນໆ		(338)	1,350
ເງິນສົດທີ່ (ໃຊ້ໄປ)/ໄດ້ມາຈາກ ການກິດຈະກຳດຳເນີນງານ		**(30,177)**	**68,488**
ອາກອນກຳໄລທີ່ຈ່າຍ		(131)	(78)
ເງິນສົດທີ່ (ໃຊ້ໄປ)/ໄດ້ມາຈາກ ກິດຈະກຳດຳເນີນງານ, ສຸດທິ		**(30,308)**	**68,410**
ເງິນສົດທີ່ໄດ້ມາຈາກຈາກກິດຈະກຳການລົງທຶນ			
ຮັບເງິນຈາກການຂາຍຊັບສິນ		30,123	-
ຊື້ ທີ່ດິນ, ອາຄານ ແລະ ອຸປະກອນ		-	(6,138)
ເງິນສົດທີ່ ໄດ້ມາ/(ໃຊ້ໄປ) ໃນກິດຈະກຳ ການລົງທຶນ, ສຸດທິ		**30,123**	**(6,138)**
ເງິນສົດທີ່ໄດ້ມາຈາກກິດຈະກຳການເງິນ			
ຊຳລະຄືນເງິນກູ້ຢືມ		-	(13,326)
ຈ່າຍເງິນປັນຜົນ		-	(14,667)
ລາຍຈ່າຍດອກເບ້ຍ		-	(34,274)
ກະແສເງິນສົດທີ່ (ໃຊ້ໄປ)/ໄດ້ມາຈາກກິດຈະກຳການເງິນ, ສຸດທິ		**-**	**(62,267)**
ການ ຫຼຸດລົງ/ເພີ່ມຂຶ້ນ ຈາກເງິນສົດ ແລະ ລາຍການທຽບເທົ່າເງິນສົດ, ສຸດທິ		**(185)**	**5**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	3	371	366
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ	3	**186**	**371**
ລາຍການທີ່ບໍ່ແມ່ນເງິນ:			
ໜີ້ຕ້ອງຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ ຈາກການສະສາງພັນທະບັດທີ່ຖືໄວ້ຈົນຄົບກຳນົດ		-	12,446
ໜີ້ຕ້ອງຮັບ ຈາກພາກສ່ວນອື່ນ ຈາກການຂາຍດິນ		27,866	-
ໜີ້ຕ້ອງຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ ຈາກການຂາຍຊັບສິນ		-	299,690
ໜີ້ຕ້ອງສົ່ງ ສຳລັບການຊື້ທີ່ດິນ, ອາຄານ ແລະ ອຸປະກອນ		-	85,029
ຊຳລະເງິນສຳລັບການຊື້ທີ່ດິນ, ອາຄານ ແລະ ອຸປະກອນ ດ້ວຍບັນຊີໜີ້ຕ້ອງຮັບ		-	85,199

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 5 ພຶດສະພາ 2026

ທ່ານ ນາງ ໄຣທອງ ພົມມະຈິດ
ຫົວໜ້າ ພະແນກ ການເງິນ ແລະ ບັນຊີ
ວັນທີ: 5 ພຶດສະພາ 2026

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 10-23 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1. ຂໍ້ມູນທົ່ວໄປ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນບໍລິສັດມະຫາຊົນ ທີ່ຢູ່ຈົດທະບຽນຂອງບໍລິສັດແມ່ນຕັ້ງຢູ່ ໂຮງແຮມ ຄອນຕິແນນ ໂທ ພຣາຊ່າ, ບ້ານໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ ລາວ.

ບໍລິສັດດຳເນີນກິດຈະການດ້ານການກໍ່ສ້າງ, ສ້ອມແປງ ແລະ ບຸລະນະຫົນທາງ, ຂົວ ແລະ ອື່ນໆ, ມີພຽງລູກຄ້າດຽວ ກໍຄື ລັດຖະບານ ຂອງ ສປປ ລາວ (ລັດຖະບານ).

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ໃນວັນທີ 10 ຕຸລາ 2017.

ເອກະສານລາຍງານທາງການເງິນນີ້ໄດ້ຜ່ານການອະນຸມັດໂດຍຄະນະຜູ້ບໍລິຫານ ໃນວັນທີ 5 ພຶດສະພາ 2026.

2. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍທາງການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດ ສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ IFRS. ເຖິງຢ່າງໃດກໍ່ຕາມ, ກະຊວງການ ເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມ ຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອກະກຽມເຮັດແຜນປະຕິບັດການ ໃນການນຳໃຊ້ IFRS ພາຍໃນໄລຍະເວລາສີ່ປີ. ເຖິງຢ່າງໃດກໍ່ຕາມ, ບໍລິສັດທີ່ຈົດ ທະບຽນໃນຕະຫຼາດຫຼັກຊັບ ຄວນປະຕິບັດການ ໃນການນຳໃຊ້ IFRS ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນຳໃຊ້ ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ (IFRS).

ການສ້າງເອກະສານລາຍງານການເງິນແມ່ນ ຜູ້ບໍລິຫານໄດ້ສ້າງການຄາດຄະເນ ແລະ ວາງການສົມມຸດຖານຫຼາຍປະການ ເພື່ອສະ ແດງເຖິງຜົນກະທົບຕໍ່ມູນຄ່າຂອງຊັບສິນ ແລະ ໜີ້ສິນ ທີ່ໄດ້ລາຍງານ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາ ທີ່ໄດ້ລາຍງານ. ສະນັ້ນ ຕົວເລກທີ່ຄາດຄະເນໄວ້ນັ້ນ ສ້າງຂຶ້ນບົນພື້ນຖານຄວາມຮູ້ທີ່ດີທີ່ສຸດ ຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ຊຶ່ງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນເບື້ອງຕົ້ນ.

ການດຳເນີນງານຕໍ່ເນື່ອງ
ສະຖານະການເງິນຂອງບໍລິສັດໃນວັນທີ 31 ເດືອນທັນວາ ປີ 2025 ສະແດງໃຫ້ເຫັນວ່າມີພາລະໜີ້ສິນໝຸນວຽນເກີນຊັບສິນ ໝຸນວຽນ ຈຳນວນ 201,667 ລ້ານກີບ (ບໍ່ລວມ ລາຍການ ຂອງພາກສ່ວນທີ່ກ່ຽວຂ້ອງ ສຸດທິ). ນອກຈາກນີ້, ບໍລິສັດມີການກູ້ ຢືມເງິນລວມຈຳນວນ 154,596 ລ້ານກີບ (ບົດອະທິບາຍ ຂໍ້ 9) ເຊິ່ງຄົບກຳນົດຊຳລະທັ້ງໝົດໃນວັນທີ 29 ເດືອນທັນວາ ປີ 2025 ແລະ ຫຼັງຈາກວັນທີ່ຂອງລາຍງານນີ້, ເງິນກູ້ດັ່ງກ່າວຍັງຄົງຄ້າງຊຳລະຢູ່.

ລາຍຮັບສຳລັບປີ 2025 ເທົ່າກັບສູນ ແລະ ກະແສເງິນສົດຈາກກິດຈະກຳດຳເນີນງານເປັນລົບ. ລາຍຮັບຂອງບໍລິສັດຂຶ້ນຢູ່ກັບ ໂຄງການຈາກລັດຖະບານ ສປປ ລາວ ເຊິ່ງຂຶ້ນຢູ່ກັບງົບປະມານປະຈຳປີຂອງລັດຖະບານ ສປປ ລາວ. ນອກຈາກນີ້, ບໍລິສັດມີ ຈຳນວນເງິນຄ້າງຊຳລະຈາກຄູ່ສັນຍາທີ່ກ່ຽວຂ້ອງເປັນໄລຍະເວລາດົນ ລວມເປັນເງິນທັ້ງໝົດ 470,964 ລ້ານກີບ (ບົດອະທິບາຍ ຂໍ້ 4).

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.1 ພື້ນຖານໃນການກະກຽມ (ຕໍ່)

ການດຳເນີນງານຕໍ່ເນື່ອງ (ຕໍ່)

ຕາມສະຖານະການເຫຼົ່ານີ້, ມັນໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທາງດ້ານ ການດຳເນີນງານຕໍ່ເນື່ອງ ທີ່ອາດຈະເຮັດໃຫ້ເກີດຄວາມສົງໃສຢ່າງຫຼວງຫຼາຍຕໍ່ຄວາມສາມາດ ໃນການດຳເນີນງານຢ່າງຕໍ່ເນື່ອງຂອງ ບໍລິສັດ. ເຖິງຢ່າງໃດກໍ່ຕາມ, ບໍລິສັດໄດ້ສ້າງແຜນຮອງຮັບ ທີ່ສຳຄັນ ເພື່ອຈັດການ ຄວາມສ່ຽງດ້ານສະພາບຄ່ອງ. ການຈັດການຂອງບໍລິສັດໄດ້ປະຕິບັດມາດຕະການດັ່ງຕໍ່ໄປນີ້:

- ບໍລິຫານຈັດການໜີ້ສິນໂດຍການເຈລະຈາຕໍ່ລອງ ການຊຳລະຄືນຕົ້ນທຶນ ແລະ ດອກເບ້ຍເງິນກູ້ທີ່ຄົບກຳນົດກຳນົດ. ເຖິງຢ່າງໃດກໍ່ຕາມ, ມີທາງເລືອກໜຶ່ງໃນສັນຍາກູ້ຢືມ ໂດຍບໍລິສັດສາມາດນຳໃຊ້ໜີ້ຕ້ອງຮັບຈາກ GoL ເປັນແຫຼ່ງໜຶ່ງ ສຳລັບການຊຳລະຄືນພາຍໃຕ້ສັນຍາ ກູ້ຢືມນີ້. ນອກຈາກນັ້ນ, ນະມື້ລາຍງານ, ຍັງບໍ່ທັນມີແຈ້ງການໃດໆຈາກຜູ້ໃຫ້ກູ້ຢືມ ກ່ຽວກັບເລື່ອງນີ້; ແລະ

- ພາກສ່ວນກ່ຽວຂ້ອງໄດ້ອອກຈົດໝາຍຢືນຢັນເຖິງ ບໍລິສັດ ວ່າຈະບໍ່ຮຽກເກັບ ໜີ້ຕ້ອງສົ່ງ ນະວັນທີ 31 ທັນວາ 2025, ລວມມູນຄ່າທັງໝົດ 80,911 ລ້ານກີບ ພາຍໃນ 12 ເດືອນຕໍ່ໜ້າ ເລີ່ມແຕ່ວັນທີ 31 ທັນວາ 2025 ເປັນຕົ້ນໄປ.

ດັ່ງນັ້ນ, ບໍລິສັດຍັງສືບຕໍ່ນຳໃຊ້ພື້ນຖານການດຳເນີນງານ ຢ່າງຕໍ່ເນື່ອງໃນການກະກຽມບົດລາຍງານການເງິນ.

2.2 ການແລກປ່ຽນເງິນຕາຕ່າງປະເທດ

ທຸກລາຍການເຄື່ອນໄຫວໃນເອກະສານລາຍງານການເງິນ ແມ່ນ ຖືກແປງຄ່າເປັນສະກຸນເງິນ ລາວກີບ (ກີບ).

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນຂອງມື້ທີ່ມີລາຍການເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນໃນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ, ຍົກເວັ້ນບາງສັນຍາກັບຜູ້ສະໜອງທີ່ບໍລິສັດກຳນົດ ອັດຕາແລກປ່ຽນແບບຄົງທີ່ ແລະ ບໍ່ຕ້ອງແປງຄ່າເປັນສະກຸນເງິນກີບທຸກສິ້ນເດືອນ ຈົນກວ່າຈະມີການຊຳລະລາຍການດັ່ງກ່າວ. ລາຍການກຳໄລ ແລະ ລາຍການຂາດທຶນທີ່ເກີດຈາກການຊຳລະ ແລະ ການແປງຄ່າຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງເທດແມ່ນ ໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມມີເປັນເງິນສົດໃນມື, ເງິນຝາກທະນາຄານ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ. ຢູ່ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີແມ່ນ ສະແດງເປັນເງິນກູ້ຢືມໃນໜີ້ສິນໝຸນວຽນ, ຖ້າມີ.

2.4 ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນມູນຄ່າຕໍ່ມາ ແມ່ນນຳມູນຄ່າຍັງເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໄສຈະສູນ ຕາມຍອດເຫຼືອໃນວັນສິ້ນປີ, ຝ່າຍບໍລິຫານພິຈາລະນາຕັ້ງຄ່າເພື່ອໜີ້ສົງໄສຈະສຳລັບຍອດເຫຼືອຄ້າງຫຼາຍກວ່າ 3 ປີ.

ບໍ່ມີການຕັ້ງສຳຮອງ ຂອງຍອດເຫຼືອລູກໜີ້ການຄ້າ ແລະ ລູກໜີ້ອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.5 ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕ່ຳກວ່າລະຫວ່າງລາຄາຕົ້ນທຶນ ແລະ ລາຄາຂາຍອອກສຸດທິ. ຕົ້ນທຶນ ໄດ້ນຳໃຊ້ວິທີ ສະເລ່ຍຕາມນ້ຳໜັກ, ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າທຳນຽມທີ່ກ່ຽວຂ້ອງກັບການນຳເຂົ້າ, ຄ່າຂົນສົ່ງ ລົບ ທຸກສ່ວນຫຼຸດທີ່ໄດ້ຮັບ. ລາຄາຂາຍອອກສຸດທິທີ່ຄາດວ່າຈະໄດ້ຮັບແມ່ນລາຄາ ສິນຄ້າຄົງເຫຼືອ ສາມາດຮັບຮູ້ໄດ້ ໃນໄລຍະປົກກະຕິຂອງທຸລະກິດ ຫຼັງຈາກຫັກຕົ້ນທຶນ ໃນການຂາຍອອກ. ຄ່າສູນເສຍມູນຄ່າ ເກີດຂຶ້ນ. ໃນກໍລະນີ ເຄື່ອງໃນສາງເຄື່ອນໄຫວຊ້າ ຫຼື ລ້າສະໄໝ ແລະ ເສຍຄຸນ.

2.6 ການລົງທຶນໃນຫຼັກຊັບ

2.6.1 ຫຼັກຊັບຖືໄວ້ຈົນຄົບກຳນົດ

ຫຼັກຊັບຖືໄວ້ຈົນຄົບກຳນົດ ແມ່ນຫຼັກຊັບທີ່ຄົງທີ່ ຫຼື ການຊຳລະຄືນສາມາດກຳນົດໄດ້ ແລະ ມີມື້ຄົບກຳນົດທີ່ແນ່ນອນ ເຊິ່ງບໍລິສັດມີຈຸດປະສົງ ຫຼື ສາມາດຖືໄວ້ຈົນຄົບກຳນົດເພື່ອຮັບດອກເບ້ຍ. ເມື່ອຫຼັກຊັບ ມີຈຸດປະສົງ/ກຳນົດ ແນ່ນອນທີ່ຈະຖືກຂາຍ ກ່ອນວັນຄົບກຳນົດ ແລະ ຖືກອະນຸມັດ ໂດຍຜູ້ບໍລິຫານ ແລະ ຫຼັກຊັບເຫຼົ່ານີ້ຈະຖືກຈັດ ປະເພດຄືນໃໝ່ ເປັນຫຼັກຊັບທີ່ພ້ອມສຳລັບການຂາຍ.

ຫຼັກຊັບຖືໄວ້ຈົນຄົບກຳນົດແມ່ນຖືກຮັບຮູ້ເລີ່ມຕົ້ນຈາກຕົ້ນທຶນ ແລະ ຈະຖືກນຳສະເໜີຕາມຕົ້ນທຶນໃນໄລຍະຕໍ່ມາ.

ຄ່າບໍລິການເພີ່ມເຕີມ ແລະ ສ່ວນຫຼຸດ ຈາກການຊື້ຫຼັກຊັບແມ່ນຈະຖືກຄິດໄລ່ໃນໃບລາຍງານຜົນໄດ້ຮັບໂດຍການນຳ ໃຊ້ວິທີການຄິດໄລ່ແບບເສັ້ນຊື່ຕະຫຼອດປີ ນັບຈາກວັນທີທີ່ໄດ້ຮັບມາຈົນເຖິງວັນຄົບກຳນົດ.

ຫຼັກຊັບຖືໄວ້ຈົນຄົບກຳນົດແມ່ນຈະຕ້ອງມີການທົບທວນສຳລັບຂໍ້ບົກຜ່ອງເປັນແຕ່ລະໄລຍະ. ເງິນແຮສຳລັບຫຼັກຊັບ ທີ່ມີຂໍ້ບົກຜ່ອງແມ່ນຈະຖືກສ້າງຂຶ້ນເມື່ອມີການຫຼຸດລົງຢ່າງມີຄວາມສຳຄັນ ຫຼື ເປັນເວລາດົນຂອງມູນຄ່າຍຸດຕິທຳທີ່ຕ່ຳ ກວ່າຕົ້ນທຶນ. ເຊິ່ງເງິນແຮດັ່ງກ່າວຈະຖືກຮັບຮູ້ໃນ “ກຳໄລ/(ຂາດທຶນ) ສຸດທິຈາກການລົງທຶນໃນຫຼັກຊັບ” ໃນໃບ ລາຍງານຜົນໄດ້ຮັບ.

ບໍ່ມີການຕັ້ງສຳຮອງ ຂອງຍອດເຫຼືອ ພັນທະບັດລັດຖະບານ ເຊິ່ງໄດ້ຈັດປະເພດເປັນການລົງທຶນໃນຫຼັກຊັບ ຖືໄວ້ ຈົນຄົບກຳນົດ.

2.7 ຊັບສິນເພື່ອການລົງທຶນ

ຊັບສິນທີ່ຖືຄອງ ເພື່ອຫາປະໂຫຍດຈາກລາຍໄດ້ຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼື ທັງສອງຢ່າງ ແລະ ບໍ່ ໄດ້ມີໄວ້ໃນງານໂດຍກິດຈະການໃນບໍລິສັດ ຈະຖືກຈັດປະເພດເປັນ ຊັບສິນ ເພື່ອການລົງທຶນ. ລວມເຖິງຊັບສິນທີ່ຢູ່ລະຫວ່າງ ກໍ່ສ້າງ ຫຼື ພັດທະນາ ເພື່ອເປັນຊັບສິນ ເພື່ອການລົງທຶນໃນອະນາຄົດ.

ທີ່ດິນຈະຖືກບັນທຶກເປັນຊັບສິນ ເພື່ອການລົງທຶນຂອງບໍລິສັດ, ກໍຕໍ່ເມື່ອ ເຂົ້າໃນນິຍາມຂອງຊັບສິນເພື່ອການລົງທຶນ.

ຊັບສິນເພື່ອການລົງທຶນ ຈະບັນທຶກເບື້ອງຕົ້ນໂດຍລາຄາທຶນ.

ຫຼັງຈາກການຮັບຮູ້ຕົ້ນທຶນ ຊັບສິນໃນການລົງທຶນໃນເບື້ອງຕົ້ນ, ຊັບສິນດັ່ງກ່າວຕ້ອງໄດ້ຖືກ ຫັກ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າ ເຊື່ອມສະສົມ ແລະ ທີ່ດິນບໍ່ໄດ້ຫັກຄ່າຫຼຸ້ຍຫ້ຽນ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.8 ທີ່ດິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານແລະ ອຸປະກອນທີ່ມີຕົວຕົນທັງໝົດ ແມ່ນໄດ້ຖືກບັນທຶກຕາມມູນຄ່າຕົ້ນທຶນເດີມ ຫັກຄ່າໜ້ອຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງທີ່ກ່ຽວກັບລາຍການຂອງຊັບສົມບັດຄົງທີ່ໄດ້ຖືກເພີ່ມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນເມື່ອ ມີຄວາມແນ່ໃຈວ່າຈະເກີດປະໂຫຍດທາງເສດຖະກິດໃນອານາຄົດເກີນກວ່າການປະເມີນຜົນການດຳເນີນງານທີ່ມີຢູ່ຂອງຊັບສິນເຂົ້າສູ່ບໍລິສັດ ແລະ ລາຍການດັ່ງກ່າວຈະຕ້ອງວັດແທກໄດ້ຢ່າງໜ້າເຊື່ອຖື ແລະ ມູນຄ່າຕາມບັນຊີຂອງລາຍຈ່າຍດັ່ງກ່າວ ຈະຖືກປ່ຽນແທນ ແລະ ຖອດອອກ ຄ່າສ້ອມແປງ ແລະ ບຳລຸງຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດ້ຮັບໃນລະຫວ່າງໄລຍະທາງການເງິນ ເມື່ອລາຍການນັ້ນເກີດຂຶ້ນ.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ. ຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ໂດຍການຄິດໄລ່ຄ່າໜ້ອຍຫ້ຽນບົນຫຼັກການ ການຄິດໄລ່ ແບບເສັ້ນຊື່ ເພື່ອຈັດສັນກັບມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ຄາດຄະເນມີດັ່ງຕໍ່ໄປນີ້:

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ຫຼື ການຕົກລົງຕາມການພິຈາລະນາ ກັບ ມູນຄ່າຕາມບັນຊີ ແລະ ຮັບຮູ້ເຂົ້າໃນ 'ແຍກປະເພດຕ່າງຫາກ' ໃນໃບລາຍງານຜົນໄດ້ຮັບ.

ປະເພດຊັບສິນ	**ປີ**
ອາຄານ	10
ພາຫະນະ	10
ອຸປະກອນຫ້ອງການ	5
ເຟີນີເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ	5

2.9 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ເບື້ອງຕົ້ນຕາມຈຳນວນເງິນທີ່ໄດ້ຮັບ.

ເງິນກູ້ຢືມ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ ບໍລິສັດ ບໍ່ມີເງື່ອນໄຂ ໂດຍການເຍື່ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງວັນທີຂອງໃບສະຫຼຸບຊັບສົມບັດ.

ຕົ້ນທຶນຂອງການກູ້ຢືມອື່ນໆທັງຫມົດ ແມ່ນໄດ້ບັນທຶກໃນໃບລາຍງານຜົນໄດ້ຮັບ ໃນໄລຍະທີ່ລາຍການນັ້ນເກີດຂຶ້ນ.

2.10 ການຮັບຮູ້ລາຍຮັບ

ລາຍຮັບລວມມີມູນຄ່າໃນໃບເກັບເງິນສຸດທິຫັກ ສ່ວນຫຼຸດທີ່ໄດ້ຮັບ, ຖ້າມີ. ລາຍຮັບຈາກການກໍ່ສ້າງ ແລະ ບໍລິການ ຮັບຮູ້ເມື່ອມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້. ຕົ້ນທຶນທີ່ກ່ຽວຂ້ອງຖືກຮັບຮູ້ໃນ ກຳໄລຫຼື ຂາດທຶນເມື່ອເກີດຂຶ້ນ.

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ອີງຕາມພື້ນຖານ ດັ່ງລຸ່ມນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ, ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບຈາກຄ່າເຊົ່າແມ່ນຮັບຮູ້ຢືນພື້ນຖານເສັ້ນຊື່ໃນຊ່ວງເວລາທີ່ກຳນົດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.11 ສັນຍາເຊົ່າ - ທີ່ທາງບໍລິສັດເປັນຜູ້ໃຫ້ເຊົ່າ

ທີ່ດິນທີ່ທາງ ບໍລິສັດໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ເປັນຊັບສິນບັດຄົງທີ່ເພື່ອການລົງທຶນ ໃນໃບສະຫຼຸບຊັບສິນບັດ ແລະ ດິນແມ່ນບໍ່ໄດ້ຫັກຄ່າຫຼ້ຍຫ້ຽນ. ລາຍຮັບຈາກຄ່າເຊົ່າ ຖືກຮັບຮູ້ ແບບເສັ້ນຊື່ ຕາມອາຍຸການຂອງສັນຍາເຊົ່າດັ່ງກ່າວ. ອ້າງອີງເຖິງ ຕາມບົດອະທິບາຍຂໍ້ 5.

2.12 ອາກອນ

ບໍລິສັດໄດ້ບັນທຶກອາກອນກຳໄລ ຕາມເກນຄົງຄ້າງ. ບໍລິສັດບໍ່ໄດ້ບັນທຶກອາກອນກຳໄລຕ້ອງຈ່າຍ ຫຼື ຕ້ອງຮັບໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ອາກອນກຳໄລ ຖືກຄິດໄລ່ໂດຍການເອົາລາຍຮັບຈາກການກໍ່ສ້າງທີ່ເກີດຂຶ້ນໃນປີ ຄູນໃຫ້ອັດຕາສ່ວນກຳໄລລວມ ແລະ ຄູນກັບອັດຕາອາກອນກຳໄລ (ຕາມບົດອະທິບາຍຂໍ້ 17). ອາກອນກຳໄລຈະໄດ້ຮັບການສະສາງຄືນເມື່ອລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ບັນຫາທາງອາກອນທີ່ພົບເຫັນອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ກັບບໍລິສັດ

ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີ ທີ່ມີການກວດສອບໄດ້ສຳເລັດ.

2.13 ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼື ພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານມາ, ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ອະທິບາຍຂໍ້ 2.14.

2.14 ຜົນປະໂຫຍດພະນັກງານ

ອີງຕາມກົດຫມາຍແຮງງານ ສປປ ລາວ, ເມື່ອພະນັກງານຈະບຳນານ ໂດຍຄົບກຳນົດ ແລະ ເງື່ອນໄຂທີ່ ກຳນົດໄວ້ໃນກົດໝາຍແຮງງານ. ເພາະສະນັ້ນບໍລິສັດຈະມີພັນທະທີ່ຕ້ອງຈ່າຍເງິນບຳນານ.

ເງິນແຮ ສຳລັບຜົນປະໂຫຍດພະນັກງານທັງໝົດບໍ່ໄດ້ຮັບຮູ້ເປັນໜີ້ສິນໃນແຕ່ລະປີ. ໜີ້ສິນ ແລະ ລາຍຈ່າຍສຳລັບຜົນປະໂຫຍດພະນັກງານຈະຮັບຮູ້ໃນໃບສະຫລຸບຊັບສິນບັດ ແລະ ໃນໃບລາຍງານຜົນໄດ້ຮັບ ຕາມຈຳນວນທີ່ເກີດຂຶ້ນຈິງ ທີ່ ຮອດກຳນົດເວລາບຳນານ.

2.15 ທຶນ

ຮຸ້ນສາມັນ ແລະ ຮຸ້ນຕາມຄວາມຕ້ອງການທີ່ບໍ່ສາມາດແລກຊື້ໄດ້ ກັບເງິນປັນຜົນທີ່ຕັດສິນໃຈຖືກຈັດປະເພດເປັນທຶນ.

ສ່ວນເພີ່ມຂອງມູນຄ່າຮຸ້ນ ແມ່ນສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງການອອກຮຸ້ນເພີ່ມເຕີມ ແລະ ມູນຄ່າຮຸ້ນ. ຄ່າໃຊ້ຈ່າຍໃນການອອກຮຸ້ນ (ເຊັ່ນ: ຄ່າປະກັນໄພ ແລະ ການປະເມີນມູນຄ່າທີ່ກ່ຽວຂ້ອງ ອື່ນໆ, ຄ່າໃຊ້ຈ່າຍທີ່ປຶກສາ) ຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາ.

ລາຍຮັບພື້ນຖານຕໍ່ຮຸ້ນ ແມ່ນຄິດໄລ່ ໂດຍການແບ່ງກຳໄລສຸດທິ ຫຼື ຂາດທຶນ ທີ່ເປັນຜົນມາຈາກຜູ້ຖືຮຸ້ນ ຂອງບໍລິສັດດ້ວຍຕົວເລກສະເລ່ຍນ້ຳໜັກຂອງຮຸ້ນສາມັນ ໃນລະຫວ່າງໄລຍະເວລາ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2025 ລ້ານກີບ	2024 ລ້ານກີບ
ເງິນສົດໃນມື	3	330
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	183	41
ລວມ	**186**	**371**

ເງິນສົດໃນມື ປະກອບມີເງິນສົດຍ່ອຍ ສຳລັບການດຳເນີນງານໃນແຕ່ລະມື້.

ເງິນຝາກທີ່ສາມາດຖອນຄືນໄດ້ ໃນເວລາທີ່ຕ້ອງການກັບສະຖາບັນການເງິນ ແມ່ນເງິນຝາກກັບທະນາຄານທ້ອງຖິ່ນພາຍໃນປະເທດ ປະກອບດ້ວຍ ສະກຸນເງິນຄື ໂດລາສະຫະລັດ, ບາດ, ແລະ ກີບ ໃນບັນຊີກະແສລາຍວັນ ໂດຍບໍ່ມີດອກເບ້ຍ.

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	2025 ລ້ານກີບ	2024 ລ້ານກີບ
ໜີ້ຕ້ອງຮັບການຄ້າ	222,698	227,543
ຫັກ: ຄ່າເຜື່ອໜີ້ສົງໄສຈະສູນ	(222,698)	(227,543)
ໜີ້ຕ້ອງຮັບ, ສຸດທິ (ກ)	-	-
ໜີ້ຕ້ອງຮັບ ຈາກ ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19) ຂ)	470,964	458,167
ໜີ້ຕ້ອງຮັບອື່ນໆ	27,160	55
ລວມ	**498,124**	**458,222**

(ກ) ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ທັນວາ ມີອາຍຸການດັ່ງຕໍ່ໄປນີ້:

	2025 ລ້ານກີບ	2024 ລ້ານກີບ
ບໍ່ຄົບກຳນົດ	-	-
ເກີນກຳນົດ:		
0 – 3 ເດືອນ	-	-
3 – 6 ເດືອນ	-	-
6 – 12 ເດືອນ	-	-
ຫຼາຍກວ່າ 1 ປີ	-	-
ຫຼາຍກວ່າ 2 ປີ	-	-
ຫຼາຍກວ່າ 3 ປີ	222,698	227,543
ຍອດລວມໜີ້ຕ້ອງຮັບການຄ້າ, ສຸດທິ	222,698	227,543
ຫັກ: ຄ່າເຜື່ອໜີ້ສົງໄສຈະສູນ*	(222,698)	(227,543)
ລວມ	**-**	**-**

*ບໍລິສັດມີລູກຄ້າພຽງລາຍດຽວຄືໜ່ວຍງານລັດຖະບານ ສປປ ລາວ, ແລະ ໃນປະຈຸບັນບໍລິສັດ, ຢູ່ລະຫວ່າງການເຈລະຈາ ເງື່ອນໄຂໃໝ່ໃນການຊຳລະເງິນກັບລັດຖະບານ. ເຊິ່ງບໍລິສັດຈະພິຈາລະນາຕັ້ງຄ່າເຜື່ອໜີ້ສົງໄສຈະສູນຕາມກົດເກນບາງ ປະການ. ຝ່າຍບໍລິຫານພິຈາລະນາຕັ້ງຄ່າເຜື່ອໜີ້ສົງໄສຈະສູນ 100% ສຳລັບຍອດເຫຼືອ ທີ່ເກີນ 3 ປີ ເປັນການສຳຮອງ. ຍົກເວັ້ນ ຖ້າມີສັນຍາທີ່ຈະຈ່າຍຈາກລັດຖະບານ.

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ (ຕໍ່)

ໃນລະຫວ່າງປີ ບໍລິສັດຍັງໄດ້ປັບຄືນຄ່າເຜື່ອໜີ້ສົງໄສຈະສູນຂອງລູກໜີ້ ມູນຄ່າ 4,845 ລ້ານກີບ (2024: 764 ລ້ານກີບ) ເພື່ອຫັກລ້າງກັບໜີ້ຕ້ອງຮັບ, ສຳລັບຄ່າເຜື່ອໜີ້ສົງໄສຈະສູນຂອງລູກໜີ້ ແມ່ນໄດ້ບັນທຶກໝົດແລ້ວ . ດັ່ງນັ້ນ, ການເຄື່ອນໄຫວ ສຸດທິຂອງຄ່າເຜື່ອໜີ້ສົງໄສຈະສູນຂອງລູກໜີ້ທີ່ປັບຄືນໃນລະຫວ່າງປີແມ່ນ 4,845 ລ້ານກີບ (2024: ຂາດທຶນ 24,003 ລ້ານກີບ).

5. ຊັບສິນບັດຄົງທີ່ເພື່ອການລົງທຶນ

	ທີ່ດິນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາ ນະວັນທີ 1 ມັງກອນ 2025		
ຕົ້ນທຶນ	189,442	189,442
ຫັກ: ຄ່າຫຼ້ຍຫ້ຽນ ສະສົມ	-	-
ຍອດເຫຼືອທ້າຍ ສຸດທິ	**189,442**	**189,442**
ຍອດເຫລືອທ້າຍ ນະວັນທີ 31 ທັນວາ 2025		
ຍອດຍົກມາ ສຸດທິ	189,442	189,442
ເພີ່ມຂຶ້ນ	-	-
ຍອດເຫຼືອທ້າຍ ສຸດທິ	**189,442**	**189,442**
ຍອດຍົກມາ ນະວັນທີ 31 ທັນວາ 2025		
ຕົ້ນທຶນ	189,442	189,442
ຫັກ: ຄ່າຫຼ້ຍຫ້ຽນ ສະສົມ	-	-
ຍອດເຫຼືອທ້າຍ ສຸດທິ	**189,442**	**189,442**

ບໍລິສັດໄດ້ເຊັນສັນຍາເຊົ່າທີ່ດິນໄລຍະຍາວກັບລູກຄ້າເປັນເວລາ 15 ປີ ເລີ່ມແຕ່ປີ 2023 – 2038.

ທີ່ດິນ 189,442 ລ້ານກີບ ແມ່ນຫຼັກຊັບຄ้ำປະກັນໃຫ້ເງິນກູ້ຂອງກຸ່ມບໍລິສັດພູສີ.

6. ຊັບສິນໝຸນວຽນອື່ນໆ

	2025 ລ້ານກີບ	2024 ລ້ານກີບ
ເງິນລ່ວງໜ້າໃຫ້ຜູ້ສະໜອງ	205	205
ເງິນລ່ວງໜ້າໃຫ້ພະນັກງານ	38	38
ຄ່າໃຊ້ຈ່າຍ ຈ່າຍລ່ວງໜ້າ	61	63
ລວມ	**304**	**306**

7. ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ

	ທີ່ດິນ ລ້ານກີບ	ອາຄານ ລ້ານກີບ	ຍານພາຫະນະ ລ້ານກີບ	ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ຄອມພິວເຕີ ແລະ ເຄື່ອງໃຊ້ ຫ້ອງການ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 31 ທັນວາ 2024						
ຕົ້ນທຶນ	320,976	18	34,852	1,061	448	357,355
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	-	(18)	(33,473)	(1,061)	(448)	(35,000)
ຄ່າດ້ອຍຄ່າ	-	-	(1,299)	-	-	(1,299)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**320,976**	**-**	**80**	**-**	**-**	**321,056**
ຍອດຍົກມາຕາມບັນຊີສຸດທິ	320,976	-	80	-	-	321,056
ເພີ່ມຂຶ້ນ	-	-	-	-	-	-
ສະສາງຕົ້ນທຶນ*	(12,797)	-	-	-	-	(12,797)
ຄ່າຫລຸ້ຍຫ້ຽນ (ບົດອະທິບາຍ 15)	-	-	(78)	-	-	(78)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**308,179**	**-**	**2**	**-**	**-**	**308,181**
ໃນວັນທີ 31 ທັນວາ 2025						
ຕົ້ນທຶນ	308,179	18	34,652	1,061	448	344,358
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	-	(18)	(33,351)	(1,061)	(448)	(34,878)
ຄ່າດ້ອຍຄ່າ	-	-	(1,299)	-	-	(1,299)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**308,179**	**-**	**2**	**-**	**-**	**308,181**

*ສະສາງອອກໃນລະຫວ່າງປີ ແມ່ນປະກອບມີທີ່ດິນຂາຍອອກໃຫ້ບຸກຄົນທີ່ສາມ

ທີ່ດິນ 129,179 ລ້ານກີບ ແມ່ນຫຼັກຊັບຄ้ຳປะกันเพื่อกู้ยืมของบໍລิสัด (ບົດອະທິບາຍຂໍ້ 9) ແລະ 176,897 ລ້ານກີບ ແມ່ນຫຼັກຊັບຄ้ຳປะกันใช้เงินกู้ของกลุ่มบໍລิสัดพูสี.

8. ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2025 ລ້ານກີບ	2024 ລ້ານກີບ
ໜີ້ຕ້ອງສົ່ງການຄ້າ - ພາກສ່ວນອື່ນ	10,866	10,665
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19) ຂ)	82,104	107,648
ລວມ	**92,970**	**118,313**

9. ເງິນກູ້ຢືມ, ສຸດທິ

	2025 ລ້ານກີບ	2024 ລ້ານກີບ
ສະຖາບັນການເງິນ	154,596	154,596
ລວມ	**154,596**	**154,596**

	2025 ລ້ານກີບ	2024 ລ້ານກີບ
ໝູນວຽນ	154,596	116,096
ບໍ່ໝູນວຽນ	-	38,500
ລວມ	**154,596**	**154,596**

ລາຍການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້:

	2025 ລ້ານກີບ	2024 ລ້ານກີບ
ຍອດຍົກມາວັນທີ 1 ມັງກອນ	154,596	167,922
ຊຳລະຄືນ	-	(13,326)
ວັນທີ 31 ທັນວາ	**154,596**	**154,596**

9. ເງິນກູ້ຢືມ, ສຸດທິ (ຕໍ່)

ເງິນກູ້ຢືມຈາກສະຖາບັນການເງິນ:

ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມຈຳນວນ 36,000 ລ້ານກີບ ກັບທະນາຄານການຄ້າພາຍໃນປະເທດ ເພື່ອເປັນທຶນໝຸນວຽນ ສຳລັບການກໍ່ສ້າງ ທາງ ເຊິ່ງມີອັດຕາດອກເບ້ຍ 17% ຕໍ່ປີ ນັບຕັ້ງແຕ່ ວັນທີ 29 ພຶດສະພາ 2015, ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ້ຳປະກັນ (ບົດອະທິບາຍຂໍ້ 7) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ, ບໍລິສັດຕ້ອງໄດ້ຊຳລະຕົ້ນທຶນພາຍໃນ 3 ປີ ນັບແຕ່ວັນທີທີ່ເບີກເງິນກູ້ຄັ້ງທຳອິດໃນແຕ່ລະປີ ແລະ ຈ່າຍດອກເບ້ຍເປັນລາຍເດືອນ.

ໃນລະຫວ່າງປີ, ບໍ່ໄດ້ມີການຊຳລະເງິນກູ້.

ນະວັນທີບົດລາຍງານ, ໄດ້ມີການເຈລະຈາເພີ່ມເຕີມກ່ຽວກັບໄລຍະເວລາການກູ້ຢືມ, ເພື່ອທີ່ບໍລິສັດຈະມີການຮັບຮູ້ລາຍຈ່າຍດອກເບ້ຍໂດຍອີງຕາມເງື່ອນໄຂຕ່າງໆທີ່ກ່າວມາຂ້າງເທິງ.

ບໍລິສັດ ໄດ້ເຮັດສັນຍາກູ້ຢືມເງິນ ອີງເງິນຈຳນວນ 300 ຕື້ກີບ ກັບທະນາຄານການຄ້າພາຍໃນປະເທດ ເຊິ່ງມີອັດຕາດອກເບ້ຍ 9.50% ຕໍ່ປີ ເລີ່ມແຕ່ວັນທີ 29 ທັນວາ 2022 ຫາ 29 ທັນວາ 2027. ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງບໍລິສັດ ເປັນຫຼັກຊັບຄ້ຳປະກັນ (ບົດອະທິບາຍຂໍ້ 7) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ. ບໍລິສັດຕ້ອງຊຳລະຄືນຕົ້ນທຶນເງິນກູ້ງວດທຳອິດໃນວັນທີ 29 ທັນວາ 2025 ແລະ ຊຳລະດອກເບ້ຍເປັນລາຍເດືອນ.

ນະວັນທີບົດລາຍງານ, ໄດ້ມີການເຈລະຈາເພີ່ມເຕີມກ່ຽວກັບໄລຍະເວລາການກູ້ຢືມ, ເພື່ອທີ່ບໍລິສັດຈະມີການຮັບຮູ້ລາຍຈ່າຍດອກເບ້ຍໂດຍອີງຕາມເງື່ອນໄຂຕ່າງໆທີ່ກ່າວມາຂ້າງເທິງ.

ການວິເຄາະເງິນກູ້ຢືມດັ່ງກ່າວມີດັ່ງຕໍ່ໄປນີ້:

	2025 **ລ້ານກີບ**	**2024** **ລ້ານກີບ**
ຕ່ຳກວ່າ 1 ປີ	154,596	116,096
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	-	38,500
ລວມ	**154,596**	**154,596**

10. ອາກອນຄ້າງຈ່າຍ

ອີງຕາມການປະຕິບັດການຊຳລະອາກອນລະຫວ່າງໜ່ວຍງານສ່ວຍສາອາກອນ ແລະ ບໍລິສັດ, ອາກອນກຳໄລ ຖືກຄິດໄລ່ໂດຍການເອົາລາຍຮັບຈາກການກໍ່ສ້າງທີ່ເກີດຂຶ້ນໃນປີ ຄູນໃຫ້ອັດຕາສ່ວນກຳໄລລວມ ແລະ ຄູນກັບອັດຕາອາກອນກຳໄລ. ອາກອນກຳໄລຈະໄດ້ຮັບການສະສາງຄືນເມື່ອ ລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນວັນທີ 31 ທັນວາ 2025 ແລະ 2024, ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງ ແຕ່ລັດຖະບານຂອງ ສປປ ລາວ ຍັງບໍ່ທັນໄດ້ຊຳລະເງິນເທື່ອ.

11. ໜີ້ສິນໝຸນວຽນອື່ນໆ

	2025 ລ້ານກີບ	2024 ລ້ານກີບ
ອາກອນມູນຄ່າເພີ່ມ ຄ້າງຈ່າຍ*	20,262	20,686
ໜີ້ຕ້ອງສົ່ງດອກເບ້ຍໃຫ້ສະຖາບັນການເງິນ	32,929	16,814
ເງິນຮັບລ່ວງໜ້າຈາກ ຜູ້ຮັບເໝົາ	930	930
ເງິນຮັບລ່ວງໜ້າຈາກລັດຖະບານ	893	893
ອື່ນໆ	3,085	2,997
	58,099	**42,320**

* ອາກອນມູນຄ່າເພີ່ມຄ້າງຈ່າຍ ໄດ້ຖືກຄິດໄລ່ໂດຍ ຄູນໃຫ້ 10% ຂອງລາຍຮັບຈາກການກໍ່ສ້າງ ແລະ ຈະຖືກຈ່າຍກໍຕໍ່ເມື່ອ ລັດຖະບານລາວຊຳລະໜີ້ໃຫ້ບໍລິສັດ.

12. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນໃນທຶນຈົດທະບຽນ

	ຈຳນວນຂອງ ຮຸ້ນ ລ້ານຮຸ້ນ	ຮຸ້ນສາມັນ ລ້ານກີບ	ສ່ວນເພີ່ມມູນ ຄ່າຮຸ້ນ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 1 ມັງກອນ 2024	582	582,000	12,540	594,540
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2024	**582**	**582,000**	**12,540**	**594,540**
ໃນວັນທີ 1 ມັງກອນ 2025	582	582,000	12,540	594,540
ການເຄື່ອນໄຫວ	2,328	-	-	-
ວັນທີ 31 ທັນວາ 2025	**2,910**	**582,000**	**12,540**	**594,540**

ບໍລິສັດ ເກີດມີສ່ວນເພີ່ມຂອງມູນຄ່າຮຸ້ນ ຈຳນວນ 12,540 ລ້ານກີບ ແລະ ຖືກຈົດຖະບຽນເຂົ້າໃນຈະຕະຫຼາດຫຼັກຊັບໃນປີ 2017.

ວັນທີ 13 ພຶດສະພາ 2025, ບໍລິສັດໄດ້ປັບປຸງໃບທະບຽນວິສາຫະກິດກັບ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະແດງໃຫ້ເຫັນ ເຖິງການດັດແກ້ໂຄງສ້າງຂອງຮຸ້ນ.
ຈາກນັ້ນ, ໃນວັນທີ 16 ມິຖຸນາ 2025, ບໍລິສັດໄດ້ມີ ການປັບປຸງໂຄງສ້າງແຕກຮຸ້ນ ສາມັນໃນອັດຕາສ່ວນ 1:5 ຢູ່ໃນຕະຫຼາດຫຼັກຊັບ ລາວ. ຜູ້ຖືຮຸ້ນທີ່ມີຊື່ປະກົດຢູ່ໃນທະບຽນຜູ້ຖືຮຸ້ນ ໃນວັນທີ 16 ມິຖຸນາ 2025, ຈະມີການປັບປ່ຽນຮຸ້ນຂອງຕົນເປັນອັດຕາສ່ວນໃຫມ່ ຂອງ 1 ຫາ 5, ຕາມລາຍລະອຽດຂ້າງລຸ່ມນີ້.

ລາຍການ	ກ່ອນແຕກຮຸ້ນອອກ	ຫຼັງແຕກຮຸ້ນອອກ
ອັດຕາສ່ວນການປ່ຽນແປງ	1:1	1:5
ມູນຄ່າຕໍ່ຮຸ້ນ	1,000 ກີບ	200 ກີບ
ຈຳນວນຮຸ້ນ	582,000,000	2,910,000,000

13. ສຳຮອງຕາມລະບຽບການ

	2025 ລ້ານກີບ	2024 ລ້ານກີບ
ຍອດຍົກມາ	21,147	17,510
ເພີ່ມຂຶ້ນ	3,654	3,637
	24,801	**21,147**

ສຳຮອງຕາມລະບຽບການແມ່ນຕັ້ງຂຶ້ນຕາມກົດໝາຍວິສາຫະກິດ ຂອງ ສປປ ລາວ ເຊິ່ງກຳນົດໃຫ້ຫັກ 10% ຂອງກຳໄລສຸດທິປະຈຳປີ ພາຍຫລັງທີ່ໄດ້ຫັກເງິນຂາດທຶນ ເປັນເງິນສຳຮອງຈົນກວ່າເງິນສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

14. ເງິນປັນຜົນ

2025:

ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນໃນວັນທີ 25 ເມສາ 2025, ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2024.

2024:

ໃນກອງປະຊຸມຜູ້ຖືຮຸ້ນ, ໃນວັນທີ 26 ເມສາ 2024, ບັນດາຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນຈາກກຳໄລສະສົມຂອງບໍລິສັດ ຫຼັງຈາກຫັກຄັງສຳຮອງຕາມກົດໝາຍ ແລະ ກຳໄລສຸດທິພາຍໃນປີ 2023 ມູນຄ່າ 22 ກີບຕໍ່ຮຸ້ນ ລວມມູນຄ່າ 12,804 ລ້ານ ແລະ ຊຳລະເຕັມຈຳນວນພາຍໃນປີ.

15. ລາຍຈ່າຍຕາມລັກສະນະ

	2025 ລ້ານກີບ	2024 ລ້ານກີບ
ລາຍຈ່າຍພະນັກງານ	1,042	1,315
ລາຍຈ່າຍຄ່າຫຼ້ຍຫ້ຽນ (ບົດອະທິບາຍທີ 7)	78	84
ລາຍຈ່າຍອື່ນໆ	686	552
ລາຍຈ່າຍດ້ານທີ່ປຶກສາ*	352	606
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	130	265
ວັດຖຸ	954	493
ລາຍຈ່າຍຄ່າເດີນທາງ	264	330
	3,506	**3,645**

* ນີ້ແມ່ນໃດ້ລວມມູນຄ່າການກວດສອບ ປີ 2025 ມູນຄ່າ 327 ລ້ານກີບ (2024: 515 ລ້ານກີບ) ແລະ ຈຳນວນທີ່ຄ້າງຈ່າຍແມ່ນ 195 ລ້ານກີບ (2024: 336 ລ້ານກີບ).

16. ລາຍຈ່າຍທາງການເງິນ

	2025 ລ້ານກີບ	2024 ລ້ານກີບ
ລາຍຈ່າຍດອກເບ້ຍ ຈາກເງິນກູ້ຢືມ		
- ສະຖາບັນການເງິນ	16,115	16,889
	16,115	**16,889**

17. ອາກອນກຳໄລ

ຕາມຫຼັກການຊຳລະອາກອນກຳໄລ ລະຫວ່າງ ເຈົ້າໜ້າທີ່ສ່ວຍສາອາກອນ ແລະ ບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ (ບົດອະທິບາຍຂໍ້ 10), ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງພາຍໃນປີ ແຕ່ລັດຖະບານຂອງ ສປປ ລາວ ຍັງບໍ່ທັນໄດ້ຊຳລະເງິນ.

18. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລ ພື້ນຖານຕໍ່ຮຸ້ນ ແມ່ນຄິດໄລ່ໂດຍການແບ່ງປັນ ກຳໄລ ສຸດທິ ຂອງຜູ້ຖືຮຸ້ນຂອງບໍລິສັດ ໂດຍຈຳນວນສະເລ່ຍຂອງຮຸ້ນສາມັນໃນ ລະຫວ່າງປີ.

	2025	2024
ຈຳນວນສະເລ່ຍຂອງຮຸ້ນສາມັນ (ລ້ານຮຸ້ນ)	1,851	1,851
ກຳໄລສຸດທິໃນປີ ໃຫ້ຜູ້ຖືຮຸ້ນ (ລ້ານກີບ)	36,536	36,368
ກຳໄລ ພື້ນຖານຕໍ່ຮຸ້ນ (ກີບ)	**19.74**	**19.65**

ພາຍຫຼັງດັດແກ້ຈຳນວນຮຸ້ນສາມັນຕາມອັດຕາສ່ວນຂອງການປ່ຽນແປງຂອງຈຳນວນຮຸ້ນ ເປັນຜົນມາຈາກການປ່ຽນແປງຂອງມູນຄ່າ ຮຸ້ນຈາກ 1,000 ກີບ ເປັນ 200 ກີບ ຕາມທີ່ໄດ້ລະບຸໄວ້ໃນ ບົດອະທິບາຍຂໍ້ 12. ຈຳນວນຮຸ້ນສາມັນໄດ້ຖືກປັບຂຶ້ນຄືນ ຄືກັບວ່າມີ ການແຕກກຮຸ້ນເກີດຂຶ້ນ ໃນຊ່ວງເລີ່ມຕົ້ນຂອງໄລຍະເວລາທຳອິດໃນບົດລາຍງານ.

19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນ ບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດ ໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ໃນວັນທີ 31 ທັນວາ 2025, ບໍລິສັດ ແມ່ນຢູ່ພາຍໃຕ້ການຄວບຄຸມໂດຍ ຄອບຄົວ ພົມມະຈິດ, ເຊິ່ງຖືຮຸ້ນ 86% ຂອງ ຮຸ້ນບໍລິສັດ (2024: 86%). ສ່ວນຮຸ້ນທີ່ເຫຼືອ 14% ແມ່ນຖືຮຸ້ນໂດຍບຸກຄົນທົ່ວໄປ, ຝ່າຍຄວບຄຸມ ບໍລິສັດ ຄື ທ່ານ ສີທອງ ພົມມະຈິດ. ເຊິ່ງ ທ່ານໄດ້ເປັນ ຜູ້ບໍລິຫານຂອງ ບໍລິສັດ ພູສີກຣຸບ ຈຳກັດ ຜູ້ດຽວ (ກຸ່ມບໍລິສັດ ພູສີ).

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງໄລຍະ ໄດ້ວິເຄາະດັ່ງລຸ່ມນີ້:

ກ) ຊື້ສິນຄ້າ ຫຼື ບໍລິການ ແລະ ອື່ນໆ

	2025 ລ້ານກີບ	2024 ລ້ານກີບ
ລາຍຮັບຄ່າເຊົ່າດິນຈາກພາກສ່ວນທີ່ກ່ຽວຂ້ອງ	9,161	8,317
ຄ່ານ້ຳມັນ	258	297
ຄ່າເຊົ່າ	180	180

ຂ) ຍອດຄ້າງຊຳລະກັບພາກສ່ວນທີ່ກ່ຽວຂ້ອງ

	2025 ລ້ານກີບ	2024 ລ້ານກີບ
ໜີ້ຕ້ອງຮັບກັບພາກສ່ວນທີ່ກ່ຽວຂ້ອງ		
(ບົດອະທິບາຍຂໍ້ 4)*	470,964	485,167
ເຈົ້າໜີ້ອື່ນໆ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 8)	82,104	107,648
ເງິນກູ້ຢືມໄລຍະຍາວໃຫ້ພາກສ່ວນທີ່ກ່ຽວຂ້ອງ	505	505

*ຈຳນວນເງິນຕ້ອງຮັບຈາກ ກຸ່ມບໍລິສັດ ພູສີ ຈຳກັດ ຜູ້ດຽວ ເຊິ່ງບໍ່ມີດອກເບ້ຍ ແລະ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ ສາມາດຮຽກເກັບຄືນໄດ້ໃນເວລາທີ່ຕ້ອງການ.

ຄ) ຄ່າຕອບແທນຜູ້ບໍລິຫານ

ບໍ່ມີຜົນປະໂຫຍດ ທີ່ໄດ້ຈ່າຍໃຫ້ຜູ້ບໍລິຫານ ໃນລະຫວ່າງປີ.

20. ເຫດການທີ່ເກີດຂຶ້ນຫຼັງຈາກວັນທີ່ປິດລາຍງານ

ໃນປີ 2026, ບໍລິສັດໄດ້ເຊັນສັນຍາການກໍ່ສ້າງ ກັບ ລັດຖະບານ ລາວ ແລະ ໄດ້ເລີ່ມກໍ່ສ້າງແລ້ວ. ເຖິງຢ່າງໃດກໍ່ຕາມ, ລາຍໄດ້ຈາກສັນຍາ ສະບັບນີ້ ຍັງບໍ່ທັນໄດ້ຮັບຮູ້ລາຍຮັບເຂົ້າບໍລິສັດເທື່ອ ແລະ ມາຮອດວັນທີ 31 ມີນາ 2026, ບໍລິສັດໄດ້ຮັບເງິນ 2,752 ລ້ານກວ່າກີບຈາກ ພາກສ່ວນກ່ຽວຂ້ອງເພື່ອສະໜັບສະໜຸນການດຳເນີນງານ.